


# ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

# ASEAN HOMESTAY STANDARD

asean

one vision
one identity
one community

# ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

# ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

# ສາລະບານ

**I: ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ**


1. ຄຳນຳ.....1
2. ພາກສະເໜີ.....2
3. ຂອບເຂດ.....2
4. ຄຳສັບ ແລະ ຄຳນິຍາມ.....3
    4.1 ສິ່ງດຶງດູດໃຈ.....3
    4.2 ຄວາມເປັນເອກະລັກ.....3
    4.3 ການຊ່ວຍເຫຼືອເບື້ອງຕົ້ນ.....3
    4.4 ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ.....3
    4.5 ການສັ່ງຈອງ.....3
    4.6 ລະບຽບການຕ່າງໆ.....3
    4.7 ກິດຈະກຳຂອງທ້ອງຖິ່ນ.....3
    4.8 ສະໂມສອນຂອງບ້ານ.....3
    4.9 ອຸປະກອນການສື່ສານ.....3
    4.10 ການຝຶກອົບຮົມລະຫວ່າງທ້ອງຖິ່ນກັບທ້ອງຖິ່ນ.....3
    4.11 ວັດທະນະທຳ.....4
    4.12 ຖານຂໍ້ມູນ.....4
    4.13 ການຊ່ວຍເຫຼືອໃນກໍລະນີສຸກເສີນ.....4
    4.14 ການເປັນມິດຕໍ່ສິ່ງແວດລ້ອມ.....4
    4.15 ການຈັດແຟມທຣີບ.....4
    4.16 ແຂກ.....4
    4.17 ການຝຶກອົບຮົມທີ່ເນັ້ນການປະຕິບັດຕົວຈິງ.....4
    4.18 ເຮືອນພັກແຮມປະຊາຊົນ.....4
    4.19 ຜູ້ສະໜອງເຮືອນພັກແຮມປະຊາຊົນ.....4
    4.20 ເຈົ້າພາບ.....4
    4.21 ທັກສະໃນການອະທິບາຍ.....4
    4.22 ການບໍລິຫານຄຸ້ມຄອງ.....5
    4.23 ປຶ້ມຄູ່ມື.....5
    4.24 ທຸລະກິດຂະໜາດນ້ອຍ.....5
    4.25 ທຳມະຊາດ.....5
    4.26 ລາຍການລວມ (package) .....5
    4.27 ລະບົບການສັ່ງຈອງ.....5
    4.28 ເຄືອຄ່າຍການສື່ສານ/ໂຄສະນາແບບອອນລາຍ.....5
    4.29 ຕະຫຼາດເປົ້າໝາຍ.....5

4.30 ການສ້າງຈຸດຂາຍທີ່ເປັນເອກະລັກ......5
4.31 ບ້ານ......5
5. ເງື່ອນໄຂ......6
5.1 ເຈົ້າພາບ......6
5.1.1 ບ້ານ ແລະ ຊຸມຊົນ......6
5.1.2 ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ......6
5.2 ທີ່ພັກເຊົາ......6
5.2.1 ເຮືອນ......6
5.2.2 ຫ້ອງນອນ......6
5.2.3 ຫ້ອງນ້ຳ ແລະ ຫ້ອງອາບນ້ຳ......7
5.3 ກິດຈະກຳ......7
5.3.1 ກິດຈະກຳພາຍໃນບ້ານ ແລະ ກິດຈະກຳແບບຊຸມຊົນມີສ່ວນຮ່ວມ......7
5.3.2 ກິດຈະກຳປິ່ນອ້ອມ......7
5.3.3 ຄວາມເປັນຂອງແທ້ດັ້ງເດີມ......7
5.4 ການບໍລິຫານຄຸ້ມຄອງ......8
5.4.1 ການນຳພາ......8
5.4.2 ການຈັດຕັ້ງ......8
5.4.3 ຖານຂໍ້ມູນ......8
5.4.4 ການສ້າງຄວາມເຂັ້ມແຂງ ແລະ ການຝຶກອົບຮົມ......8
5.4.5 ການຮ່ວມມື......8
5.5 ທີ່ຕັ້ງ......9
5.5.1 ການເຂົ້າເຖິງ......9
5.6 ສຸຂະອະນາໄມ ແລະ ຄວາມສະອາດ......9
5.6.1 ເຮືອນ (ເຮືອນຄົວ, ຫ້ອງນອນ ແລະ ຫ້ອງນ້ຳ)......9
5.6.2 ບໍລິເວນເດີ່ນບ້ານ......9
5.6.3 ການກະກຽມ ແລະ ປຸງແຕ່ງອາຫານ......9
5.7 ຄວາມປອດໄພ ແລະ ການຮັກສາຄວາມປອດໄພ......10
5.7.1 ການຝຶກອົບຮົມກ່ຽວກັບຄວາມປອດໄພ......10
5.7.2 ຄວາມປອດໄພໃນເວລາດຳເນີນກິດຈະກຳ......10
5.7.3 ການແນະນຳກ່ຽວກັບຄວາມປອດໄພ......10
5.7.4 ການຊ່ວຍເຫຼືອໃນກໍລະນີສຸກເສີນ ແລະ ການອົບພະຍົບ......10
5.8 ການຕະຫຼາດ ແລະ ການໂຄສະນາ......11

5.8.1 ກິດຈະກຳການໂຄສະນາ....11
5.8.2 ການຮ່ວມມືກັບບໍລິສັດທ່ອງທ່ຽວ....11
5.8.3 ການເຮັດການຕະຫຼາດທາງເວັບໄຊ້....11
5.9 ຫຼັກການໃນການພັດທະນາແບບຍືນຍົງ....11
5.9.1 ຄວາມຍືນຍົງທາງດ້ານເສດຖະກິດ....11
5.9.2 ຄວາມຍືນຍົງທາງດ້ານສິ່ງແວດລ້ອມ....12
5.9.3 ຄວາມຍືນຍົງທາງດ້ານວັດທະນະທຳ ແລະ ສັງຄົມ....12

**II: ວິທີປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ**

1. ຄຳນຳ....14
2. ພາກສະເໜີ....14
3. ຂອບເຂດ....14
4. ຄຳສັບ ແລະ ຄຳນິຍາມ....14
5. ຂໍ້ກຳນົດເບື້ອງຕົ້ນຂອງການປະເມີນ....15
6. ຫຼັກການປະເມີນ....15
7. ວິທີການປະເມີນ....16
7.1 ກຳນົດນ້ຳໜັກຂອງແຕ່ລະມາດຖານຫຼັກ....17
7.2 ເງື່ອນໄຂໃນການກຳນົດມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ....19
7.3 ຂໍ້ກຳນົດສຳລັບມາດຕະຖານເຮືອນພັກແຮມປະຊາຊົນ....19

**III: ຂັ້ນຕອນການປະເມີນ ແລະ ໜ່ວຍງານຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ**

1. ຄຳນຳ....30
2. ພາກສະເໜີ....30
3. ຂອບເຂດ....30
4. ຄຳສັບ ແລະ ຄວາມໝາຍ....31
5. ໜ່ວຍງານຢັ້ງຢືນມາດຕະຖານ....31
5.1 ຂັ້ນຕອນການຈັດຕັ້ງປະຕິບັດການກວດສອບມາດຕະຖານເຮືອນພັກແຮມ ປະຊາຊົນອາຊຽນ....34
5.2 ລາຍການປະເມີນສຳລັບຜູ້ປະເມີນ....35
5.3 ຄວາມຕ້ອງການເບື້ອງຕົ້ນ....36
6. ຂັ້ນຕອນການກວດກາ....37
6.1 ເຮືອນພັກແຮມປະຊາຊົນທີ່ບໍ່ຜ່ານການປະເມີນ....39
6.2 ເຮືອນພັແຮມປະຊາຊົນທີ່ຜ່ານການປະເມີນ....39
7. ວິທີການປະເມີນ....40
8. ຄວາມຮັບຜິດຊອບຂອງຄະນະປະເມີນຜົນ....41
9. ອາຍຸການນຳໃຊ້....42
10. ຜົນປະໂຫຍດທີ່ຈະໄດ້ຮັບ....42
11. ໂລໂກ້ມາດຕະຖານ....43

12. ໃບຢັ້ງຢືນ ແລະ ແຜ່ນປ້າຍລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ....................................43
13. ແບບຟອມປະເມີນ..........................................................................................................45
14. ຄຳແນະນຳການປະເມີນເຮືອນພັກແຮມປະຊາຊົນອາຊຽນ.........................................................46
14.1 ເງື່ອນໄຂພື້ນຖານ.......................................................................................................48
14.2 ເງື່ອນໄຂການປະເມີນສຳລັບຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ....................................49
14.3 ເງື່ອນໄຂການປະເມີນສຳລັບຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຫຼື ຫຼັງຄາເຮືອນ........................64
14.4 ສະຫຼູບການປະເມີນເຮືອນພັກແຮມປະຊາຊົນ ສຳລັບຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ..........71
14.5 ສະຫຼູບ ການປະເມີນເຮືອນພັກແຮມປະຊາຊົນ ສຳລັບຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ..............73

# ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

## 1. ຄຳນຳ

ຈຸດປະສົງຂອງການແປ ແລະ ຮ່າງມາດຕະຖານສະບັບນີ້ແມ່ນເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຮມປະຊາຊົນ (Homestay Standard) ໃນ ສປປ ລາວ ໃຫ້ມີປະສິດທິຜົນ ແລະ ປະສິດທິພາບແທດເໝາະກັບສະພາບຂອງບັນດາປະເທດສະມາຊິກອາຊຽນ ດັ່ງທີ່ໄດ້ລະບຸໄວ້ໃນແຜນຍຸດທະສາດການທ່ອງທ່ຽວອາຊຽນ ASEAN Tourism Strategic Plan (ATS) 2011-2015. ອີກດ້ານໜຶ່ງ ກໍ່ເພື່ອສ້າງປະສົບການ ທີ່ມີຄຸນນະພາບໃຫ້ແກ່ຜູ້ມາຢ້ຽມຢາມໂດຍການສະແດງອອກເຖິງຄວາມອຸດົມສົມບູນຂອງຊັບພະຍາກອນທ້ອງຖິ່ນ, ວິຖີຊີວິດທີ່ເປັນເອກະລັກຂອງປະຊາຊົນລາວບັນດາເຜົ່າ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພ ແລະ ໜ້າສົນໃຈ. ການສ້າງມາດຕະຖານດັ່ງກ່າວແມ່ນຈະຊ່ວຍຍົກສູງຄຸນນະພາບຂອງການບໍລິການ, ປັບປຸງສິ່ງອຳນວຍຄວາມສະດວກ ແລະ ພັດທະນາຊັບພະຍາກອນມະນຸດທີ່ກ່ຽວພັນກັບກິດຈະກຳເຮືອນພັກແຮມປະຊາຊົນອາຊຽນ ໂດຍການວາງທິດທາງທີ່ມີການບໍລິຫານຈັດການທີ່ດີກວ່າເກົ່າ ເພື່ອກ້າວໄປສູ່ການຄຸ້ມຄອງໃນລະດັບມືອາຊີບ, ຄຳນຶງເຖິງຄວາມຕ້ອງການ, ຄວາມສາມາດ ແລະ ຄວາມຫຼາກຫຼາຍດ້ານວັດທະນະທຳຂອງບັນດາປະເທດສະມາຊິກອາຊຽນ.

ໃນການກຳນົດມາດຕະຖານນີ້, ມາດຕະຖານເຮືອນພັກແຮມປະຊາຊົນ ແລະ ກົດລະບຽບຄຳແນະນຳຕ່າງໆທີ່ເຄີຍນຳໃຊ້ໂດຍບັນດາປະເທດສະມາຊິກອາຊຽນແມ່ນໄດ້ຮັບການຄົ້ນຄວ້າ ແລະ ວິເຄາະ, ເຊິ່ງບັນຫາພື້ນຖານ ແລະ ຊ່ອງວ່າງຕ່າງໆຈະໄດ້ຮັບການແກ້ໄຂ. ມາດຕະຖານນີ້ແມ່ນຈະສຸມໃສ່ 9 ເງື່ອນໄຂ, ເຊິ່ງປະກອບມີການເປັນເຈົ້າພາບ, ທີ່ພັກອາໄສ, ກິດຈະກຳ, ການບໍລິຫານຄຸ້ມຄອງ, ທີ່ຕັ້ງ, ອະນາໄມແລະຄວາມສະອາດ, ຄວາມປອດໄພ ແລະ ການຮັກສາຄວາມປອດໄພ, ການຕະຫຼາດ ແລະ ບັນຫາຄວາມຍືນຍົງ.

ຂໍສະແດງຄວາມຂອບໃຈຢ່າງຍິ່ງມາຍັງ ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ທີ່ໄດ້ໃຫ້ການສະໜັບສະໜູນດ້ານງົບປະມານເພື່ອແປ ແລະ ຮ່າງມາດຕະຖານນີ້ຂຶ້ນມາ. ຫວັງຢ່າງຍິ່ງວ່າມາດຕະຖານເຮືອນພັກແຮມປະຊາຊົນອາຊຽນນີ້ຈະເປັນທິດຊີ້ນຳແກ່ຜູ້ຈັດຕັ້ງປະຕິບັດຂັ້ນສູນກາງແລະຂັ້ນທ້ອງຖິ່ນ, ທັງເປັນເອກະສານຕົວຢ່າງທີ່ປະຊາຊົນທ້ອງຖິ່ນຈະຕ້ອງປະຕິບັດຕາມເພື່ອເຮັດໃຫ້ເຮືອນພັກແຮມປະຊາຊົນໃນ ສປປ ລາວ ໄດ້ມາດຕະຖານ ແລະ ສ້າງຄວາມປະທັບໃຈໃຫ້ແກ່ຜູ້ທີ່ມາຢ້ຽມຢາມ.

**ຫົວໜ້າກົມພັດທະນາການທ່ອງທ່ຽວ**

## 2. ພາກສະເໜີ

ໃນພາກພື້ນອາຊຽນ, ກິດຈະກຳເຮືອນພັກແຮມປະຊາຊົນ (Homestay) ຖືໄດ້ວ່າເປັນທາງເລືອກດ້ານການທ່ອງທ່ຽວອີກຮູບແບບໜຶ່ງທີ່ຈະເຮັດໃຫ້ນັກທ່ອງທ່ຽວມີໂອກາດໃນການເກັບກ່ຽວປະສົບການ ແລະ ສຳພັດວິຖີຊີວິດແບບທ້ອງຖິ່ນກັບຊຸມຊົນ. ປະສົບການທາງທຳມະຊາດຂອງການທ່ອງທ່ຽວຮູບແບບດັ່ງກ່າວແມ່ນກຳລັງໄດ້ຮັບຄວາມນິຍົມຫຼາຍຂຶ້ນພາຍໃນກຸ່ມນັກທ່ອງທ່ຽວສາກົນ. ກົງກັນຂ້າມກັບການທ່ອງທ່ຽວມວນຊົນ, ກິດຈະກຳເຮືອນພັກແຮມປະຊາຊົນຈະເປັນກິດຈະກຳການທ່ອງທ່ຽວທີ່ມີຕົວເລກນັກທ່ອງທ່ຽວຕ່ຳ, ບໍ່ມີຄວາມໜາແໜ້ນຂອງນັກທ່ອງທ່ຽວມີຄວາມຍ່ອມຍານ ແລະ ເປັນທຳມະຊາດ, ທີ່ສຳຄັນໄປກວ່ານັ້ນເຈົ້າຂອງກິດຈະການຈະຕ້ອງເປັນຄົນໃນຊຸມຊົນເພື່ອທີ່ຜົນປະໂຫຍດທາງເສດຖະກິດຈະໄດ້ເຂົ້າສູ່ເຂົາເຈົ້າໂດຍກົງ.

ໃນຖານະທີ່ເປັນອົງປະກອບໜຶ່ງຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ແນວຄວາມຄິດຂອງການທ່ອງທ່ຽວເຮືອນພັກແຮມປະຊາຊົນໄດ້ຖືກຍອມຮັບວ່າ ເປັນເຄື່ອງມືໜຶ່ງທີ່ຊ່ວຍພັດທະນາເຂດຫ່າງໄກສອກຫຼີກຂອງຫຼາຍປະເທດໃນຂົງເຂດອາຊຽນ. ກິດຈະກຳເຮືອນພັກແຮມປະຊາຊົນສາມາດປັບປຸງຄຸນນະພາບ ຂອງຊີວິດການເປັນຢູ່ຂອງຄົນໃນທ້ອງຖິ່ນໂດຍການມີລາຍໄດ້ເພີ່ມຂຶ້ນຈາກການເຂົ້າຮ່ວມກິດຈະກຳດັ່ງກ່າວ, ສົ່ງເສີມວັດທະນະທຳທ້ອງຖິ່ນ, ສິລະປະ ແລະ ຫັດຖະກຳ, ສົ່ງເສີມໃຫ້ມີການຟື້ນຟູສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ສະຖານທີ່ທີ່ສຳຄັນຂອງທ້ອງຖິ່ນ ແລະ ພັກດັນໃຫ້ມີການອະນຸລັກທຳມະຊາດໂດຍການໃຫ້ການສຶກສາແກ່ຊຸມຊົນ.

ນັກທ່ອງທ່ຽວຈຳນວນຫຼາຍທົ່ວໂລກ ແມ່ນກຳລັງມຸ່ງເປົ້າມາທີ່ປະເທດອາຊຽນ ເພື່ອການທ່ອງທ່ຽວຢູ່ໃນເຂດຊົນນະບົດ, ການພັດທະນາເຮືອນພັກແຮມປະຊາຊົນໃຫ້ເປັນລະບົບ ແມ່ນເປັນສິ່ງສຳຄັນຫຼາຍໃນການສ້າງຜະລິດຕະພັນໃໝ່ໃຫ້ນັກທ່ອງທ່ຽວໄດ້ຮຽນຮູ້, ດ້ວຍການສະແດງໃຫ້ເຫັນເຖິງວິຖີການດຳລົງຊີວິດຂອງປະຊາຊົນທ້ອງຖິ່ນ, ນຳສະເໜີຮູບແບບຂອງການພັກຜ່ອນທີ່ບໍ່ແພງເກີນໄປ ເຊິ່ງເຕັມໄປດ້ວຍຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ ການໃຫ້ຄວາມຮູ້. ຈຸດຂາຍຂອງກິດຈະກຳເຮືອນພັກແຮມປະຊາຊົນນີ້ບໍ່ແມ່ນກຳນົດເອົາເອກະລັກສະເພາະດ້ານໃດດ້ານໜຶ່ງ ຂອງບ້ານເທົ່ານັ້ນເພື່ອເປັນຈຸດຂາຍ, ແຕ່ມີເປົ້າໝາຍແນ່ໃສ່ທີ່ວິທີການດຳລົງຊີວິດຂອງຊຸມຊົນໃດໜຶ່ງ, ພ້ອມດຽວກັນນັ້ນບັນດາກິດຈະກຳຕ່າງໆພາຍໃນຊຸມຊົນແມ່ນເປັນປັດໄຈທີ່ມີອິດທິພົນຫຼາຍຕໍ່ການຕັດສິນໃຈມາທ່ຽວຂອງນັກທ່ອງທ່ຽວ.

ຄວາມສຳເລັດຂອງກິດຈະກຳການທ່ອງທ່ຽວເຮືອນພັກແຮມປະຊາຊົນໃນພາກພື້ນອາຊຽນ ແມ່ນຂຶ້ນກັບຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ຄວາມຮຽກຮ້ອງຕ້ອງການດ້ານຄຸນນະພາບຂອງຜູ້ທີ່ມາຢ້ຽມຢາມ. ດັ່ງນັ້ນ ການສ້າງມາດຕະຖານຂອງເຮືອນພັກແຮມປະຊາຊົນຂອງອາຊຽນຈຶ່ງມີຄວາມຈຳເປັນ ທັງເປັນໂອກາດໃນການສ້າງຄວາມເຂົ້າໃຈລະຫວ່າງປະເທດສະມາຊິກອາຊຽນວ່າໂຮມສະເຕແມ່ນຫຍັງ ແລະ ເພື່ອກຳນົດມາດຕະຖານໂຮມສະເຕຂັ້ນພື້ນຖານໃຫ້ແກ່ອາຊຽນ. ມາດຖານດັ່ງກ່າວຍັງເຮັດໃຫ້ມີການປະສານງານທີ່ດີກວ່າເກົ່າ, ພັກດັນໃຫ້ມີການຮ່ວມມືຫຼາຍຂຶ້ນກວ່າເກົ່າລະຫວ່າງບັນດາຜູ້ທີ່ມີສ່ວນຮ່ວມ, ການປົກປັກຮັກ ສາສິ່ງແວດລ້ອມໄປພ້ອມໆກັບການພັດທະນາເສດຖະກິດ ຂອງຊົນນະບົດເພື່ອຫຼຸດຜ່ອນບັນຫາຄວາມທຸກຍາກ.

## 3. ຂອບເຂດ

ມາດຕະຖານດັ່ງກ່າວແມ່ນແນໃສ່ສະຖານທີ່ພັກອາໄສແບບເຮືອນພັກແຮມປະຊາຊົນ, ເຊິ່ງແຂກຈະໄດ້ອາໄສພັກເຊົາຢູ່ກັບຄອບຄົວທີ່ເອີ້ນວ່າເຈົ້າພາບ ແລະ ຮຽນຮູ້ວິຖີການດຳລົງຊີວິດປະຈຳວັນຂອງຄອບຄົວ ແລະ ຊຸມຊົນໂດຍທາງກົງ ແລະ ທາງອ້ອມ. ມາດຕະຖານດັ່ງກ່າວແນ່ໃສການໃຫ້ຄວາມສຳຄັນໄປທີ່ບາງບັນຫາທີ່ສຳຄັນເປັນຕົ້ນແມ່ນ: ການເປັນເຈົ້າພາບ, ທີ່ພັກ, ກິດຈະກຳ, ຄວາມເປັນເອກະລັກ, ການບໍລິຫານຈັດການ, ສະຖານທີ່ຕັ້ງ, ຄວາມປອດໄພ ແລະ ການຮັກສາຄວາມປອດໄພ, ການຕະຫຼາດ ແລະ ຄວາມຍືນຍົງ.

## 4. ຄຳສັບ ແລະ ຄຳນິຍາມ

ຄຳສັບ ແລະ ຄຳນິຍາມ ທີ່ນຳໃຊ້ເຂົ້າໃນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນມີລາຍລະອຽດດັ່ງລຸ່ມນີ້:

### 4.1 ແຫລ່ງທ່ອງທ່ຽວ

ສະຖານທີ່ໆໜ້າສົນໃຈ ແລະ ເປັນທີ່ໜ້າເພິ່ງພໍໃຈໃຫ້ແກ່ນັກທ່ອງທ່ຽວຜູ້ທີ່ມາຢ້ຽມຢາມ, ໂດຍທົ່ວໄປແມ່ນຄຸນຄ່າໃນໂຕຂອງມັນເອງ ຫລື ສິ່ງທີ່ສະແດງອອກມາ ໂດຍສະເພາະແມ່ນ ຄວາມໂດດເດັ່ນທາງດ້ານວັດທະນະທຳ ແລະ ປະຫວັດສາດ ເຊັ່ນ ສະຖານທ່ອງທ່ຽວທາງປະຫວັດສາດ, ສະຖານທີ່ສະແດງສິລະປະ, ບ່ອນຂາຍເຄື່ອງຫັດຖະກຳ, ສະຖານທີ່ທຳການຜະລິດໃນທ້ອງຖິ່ນ ແລະ ແຫລ່ງທ່ອງທ່ຽວທາງທຳມະຊາດ.

### 4.2 ຄວາມເປັນຂອງແທ້ດັ້ງເດີມ

ຂອງແທ້, ດັ້ງເດີມ, ບໍລິສຸດ ຫຼື ສິ່ງທີ່ມີຢູ່ຈິງ ເພື່ອໃຫ້ປະສົບການຕົວຈິງແກ່ແຂກ ໂດຍສະເພາະແມ່ນກິດຈະກຳທີ່ຕິດພັນກັບທຳມະຊາດ ແລະ ວັດທະນະທຳຂອງທ້ອງຖິ່ນ.

### 4.3 ການປະຖົມພະຍາບານຂັ້ນຕົ້ນ

ການເບິ່ງແຍງ ແລະ ຮັກສາໃນຂັ້ນພື້ນຖານກໍລະນີເກີດເຫດສຸກເສີນກັບນັກທ່ອງທ່ຽວທີ່ບາດເຈັບ ຫຼື ບໍ່ສະບາຍກ່ອນຈະໄດ້ຮັບການປິ່ນປົວຈາກແພດຫມໍ.

### 4.4 ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ

ການຄົງຢູ່ຂອງຄວາມຫຼາກຫຼາຍຂອງພືດພັນ, ສັດປ່າ ແລະ ສິ່ງທີ່ມີຊີວິດໃນສະພາບແວດລ້ອມທຳມະຊາດ.

### 4.5 ການຈັບຈອງ

ການສັ່ງຈອງການບໍລິການເຮືອນພັກແຮມປະຊາຊົນໂດຍຜ່ານສື່ຕ່າງໆເຊັ່ນວ່າ: ອິນເຕີເນັດ, ແຟັກ, ໂທລະສັບ ແລະ ອື່ນໆ.

### 4.6 ລະບຽບການ

ບັນດາລະບຽບການທີ່ລະບຸເຖິງຄວາມຮັບຜິດຊອບ, ການວາງຕົວຢ່າງເໝາະສົມສຳລັບແຂກ ແລະ ເຈົ້າພາບ ຫຼື ເອີ້ນອີກຢ່າງໜຶ່ງວ່າສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ, ເພື່ອປູກຈິດສຳນຶກກ່ຽວກັບການປະພຶດຕົວຢ່າງເໝາະສົມຂອງແຂກເພື່ອໃຫ້ສອດຄ່ອງກັບສະພາບແວດລ້ອມຂອງພື້ນທີ່ນັ້ນໆ.

### 4.7 ກິດຈະກຳຂອງຊຸມຊົນ

ກິດຈະກຳທີ່ເນັ້ນໃສ່ການເຮັດວຽກຮ່ວມກັນຂອງຊຸມຊົນ, ທີ່ຊາວບ້ານໄດ້ຮ່ວມຕົວກັນເຮັດກິດຈະກຳເຊັ່ນວ່າ: ການທຳຄວາມສະອາດໝູ່ບ້ານ ແລະ ການກຽມຄວາມພ້ອມກ່ອນແຂກຈະມາຢ້ຽມຢາມ.

### 4.8 ສະໂມສອນຂອງບ້ານ

ເປັນສະຖານທີ່ທີ່ຄົນໃນທ້ອງຖິ່ນ ແລະ ແຂກທີ່ມາຢ້ຽມຢາມພົບປະເຊິ່ງກັນ ແລະ ກັນ. ເຊິ່ງສາມາດເປັນສະຖານທີ່ເຕົ້າໂຮມ, ສະແດງສິລະປະວັດທະນະທຳ ຫຼື ເປັນສະຖານທີ່ເຮັດກິດຈະກຳຕ່າງໆ.

### 4.9 ອຸປະກອນການສື່ສານ

ເຄື່ອງມື ຫຼື ອຸປະກອນທີ່ໃຊ້ໃນການສົ່ງຂໍ້ມູນລະຫວ່າງຜູ້ສົ່ງ ແລະ ຜູ້ຮັບເຊັ່ນ: ໂທລະສັບມືຖື, ວິທະຍຸສື່ສານ, GPS ແລະ ອື່ນໆ.

### 4.10 ການຝຶກອົບຮົມລະຫວ່າງຊຸມຊົນກັບຊຸມຊົນ

ວິທີການໃນການຝຶກອົບຮົມ ໂດຍພື້ນຖານຫຼັກໆແລ້ວແມ່ນການໄປຖອດຖອນເອົາບົດຮຽນນຳບ້ານເຮືອນພັກແຮມປະຊາຊົນທີ່ໄດ້ຮັບຜົນສຳເລັດ, ໂດຍການສຶກສາຈາກແຕ່ລະກໍລະນີ ແລະ ການປະຕິບັດຕົວຈິງນຳຜູ້ທີ່ມີປະສົບການໃນການເຄີຍໃຫ້ການບໍລິການເຮືອນພັກແຮມປະຊາຊົນ.

### 4.11 ວັດທະນະທຳ

ທຳນຽມ, ປະເພນີ, ພຶດຕິກຳຂອງຄົນທ້ອງຖິ່ນ ແລະ ຄວາມເຊື່ອຖື.

### 4.12 ຖານຂໍ້ມູນ

ລະບົບການເກັບກຳຂໍ້ມູນ, ລະບົບການບໍລິຫານຈັດການ ແລະ ການແຍກເພດຂອງຂໍ້ມູນ.

### 4.13 ການຊ່ວຍເຫຼືອໃນກໍລະນີສຸກເສີນ

ສະຖານະການ ຫຼື ເຫດການທີ່ເກີດຂຶ້ນໂດຍບໍ່ຄາດຄິດ ແລະ ຕ້ອງການໃຫ້ມີການອົບພະຍົບຜູ້ທີ່ໄດ້ຮັບບາດເຈັບອອກຈາກພື້ນທີ່ໂດຍທັນທີ.

### 4.14 ການເປັນມິດຕໍ່ສິ່ງແວດລ້ອມ

ການເປັນມິດຕໍ່ລະບົບນິເວດ, ເປັນມິດຕໍ່ທຳມະຊາດ ແລະ ພື້ນທີ່ສີຂຽວ, ເຊິ່ງລວມໄປເຖິງສິນຄ້າ ແລະ ການບໍລິການ, ກົດໝາຍ, ແນວທາງ ແລະ ນະໂຍບາຍຕ່າງໆເພື່ອກໍ່ໃຫ້ເກີດຄວາມເສຍຫາຍ ຫຼື ຮຸກຮານສະພາບແວດລ້ອມ ແລະ ຊຸມຊົນທ້ອງຖິ່ນໜ້ອຍທີ່ສຸດ.

### 4.15 ການຈັດທັດສະນະສຶກສາ (Familiarization – FAM Trip)

ການຈັດການລາຍການທ່ອງທ່ຽວ ແບບທົດລອງໃຫ້ແກ່ບັນດາບໍລິສັດທ່ອງທ່ຽວ, ຜູ້ປະກອບການດ້ານການທ່ອງທ່ຽວ, ສື່ມວນຊົນ ແລະ ບັນດາຜູ້ທີ່ກ່ຽວຂ້ອງກັບອຸດສະຫະກຳການທ່ອງທ່ຽວຈຸດປະສົງ ເພື່ອໃຫ້ຄວາມຮູ້ ແລະ ສ້າງຄວາມຄຸ້ນເຄີຍກັບສະຖານທີ່ທ່ອງທ່ຽວໃດໜຶ່ງແກ່ກຸ່ມຄົນເຫຼົ່ານີ້, ໂດຍການທີ່ໄດ້ເຫັນສະຖານທີ່ດ້ວຍຕົວເອງ, ບັນດາຜູ້ປະກອບການດ້ານການທ່ອງທ່ຽວເປັນຜູ້ທີ່ຈະສາມາດກະກຽມເພື່ອຕອບຄຳຖາມຂອງນັກທ່ອງທ່ຽວໄດ້ດີກວ່າ ແລະ ຈະສາມາດໂຄສະນາໃຫ້ມີການຂະຫຍາຍຕົວດ້ານການທ່ອງທ່ຽວມາສູ່ເຂດດັ່ງກ່າວ, ສິ່ງເຫຼົ່ານີ້ເອີ້ນວ່າແຟມທຣິບ.

### 4.16 ແຂກ

ບຸກຄົນທີ່ມາພັກອາໄສຢູ່ເຮືອນພັກແຮມປະຊາຊົນ, ໂດຍທົ່ວໄປແລ້ວແມ່ນມີສ່ວນຮ່ວມໃນກິດຈະກຳຂອງຊຸມຊົນ ແລະ ບ້ານ.

### 4.17 ການຝຶກອົບຮົມທີ່ເນັ້ນການປະຕິບັດຕົວຈິງ

ການຮຽນຮູ້ທີ່ອີງໃສ່ການປະຕິບັດຕົວຈິງ, ຮຽນຮູ້ຈາກເຫດການທີ່ເກີດຂຶ້ນຫຼາຍກວ່າທິດສະດີ ຫຼື ການເຂົ້າຫ້ອງຮຽນ.

### 4.18 ເຮືອນພັກແຮມປະຊາຊົນ

ເປັນຮູບແບບຂອງການທ່ອງທ່ຽວທີ່ນັກທ່ອງທ່ຽວ ຈະພັກແຮມນຳຄອບຄົວເຈົ້າພາບໃນເຮືອນຫຼັງດຽວກັນ ແລະ ສຳພັດວິຖີການດຳລົງຊີວິດປະຈຳວັນຂອງຄອບຄົວ ແລະ ຊຸມຊົນທ້ອງຖິ່ນ.

### 4.19 ຜູ້ສະໜອງເຮືອນພັກແຮມປະຊາຊົນ

ຄອບຄົວທ້ອງຖິ່ນທີ່ສະເໜີບ້ານຂອງພວກເຂົາໃຫ້ເປັນເຮືອນພັກແຮມປະຊາຊົນ.

### 4.20 ເຈົ້າພາບ

ບຸກຄົນ ຫຼື ຊຸມຊົນ ທີ່ເປັນຕົວແທນໃຫ້ການບໍລິການເຮືອນພັກແຮມປະຊົນ ແລະ ຕ້ອນຮັບແຂກທີ່ມາໃຊ້ບໍລິການເຮືອນພັກແຮມປະຊາຊົນ.

### 4.21 ທັກສະໃນການອະທິບາຍ

ວຽກທີ່ສັບຊ້ອນທີ່ລວມເອົາຄວາມສາມາດຫຼາຍໆດ້ານ ລວມເຖິງຄວາມສາມາດທາງດ້ານພາສາ ເພື່ອທີ່ຈະສາມາດຖ່າຍທອດ ແລະ ນຳສະເໜີຂໍ້ມູນຢ່າງມີປະສິດທິພາບ.

### 4.22 ການບໍລິຫານຄຸ້ມຄອງ

ຂັ້ນຕອນການບໍລິຫານຄຸ້ມຄອງທີ່ກ່ຽວຂ້ອງກັບບັນດາກຸ່ມຄົນທີ່ຮັບຜິດຊອບໃນການບໍລິຫານຈັດການຊຸມຊົນ ຫຼື ການຈັດຕັ້ງເປັນຕົ້ນແມ່ນການວາງແຜນ, ການບໍລິຫານຈັດການ, ບຸກຄະລາກອນ, ການນຳພາ ແລະ ການຄວບຄຸມເພື່ອບັນລຸຈຸດປະສົງຂອງອົງກອນ.

### 4.23 ປຶ້ມຄູ່ມື

ການອະທິບາຍລາຍລະອຽດເທື່ອລະຂັ້ນຕອນກ່ຽວກັບຫົວຂໍ້ໃດໜຶ່ງເປັນປຶ້ມອ້າງອີງໃຫ້ລາຍລະອຽດກ່ຽວກັບສິ່ງທີ່ຕ້ອງກະກຽມ, ແນະນຳການປະຕິບັດຕົວຈິງໃນພາກສະໜາມ ແລະ ແນະນຳການແກ້ໄຂບັນຫາໃນເມື່ອມັນເກີດຂຶ້ນ.

### 4.24 ທຸລະກິດຂະໜາດນ້ອຍ

ເຈົ້າຂອງທຸລະກິດຂະໜາດນ້ອຍຢູ່ທ້ອງຖິ່ນທີ່ຜະລິດເປັນສິນຄ້າ ແລະ ການໃຫ້ບໍລິການໂດຍນຳໃຊ້ຊັບພະຍາກອນທີ່ມີຢູ່ໃນທ້ອງຖິ່ນ.

### 4.25 ທຳມະຊາດ

ຊັບພະຍາກອນທຳມະຊາດເປັນຕົ້ນແມ່ນ: ປ່າໄມ້, ແມ່ນ້ຳ, ຖ້ຳ, ພູຜາ ແລະ ອື່ນໆ.

### 4.26 ລາຍການທ່ອງທ່ຽວລວມ (package)

ຜະລິດຕະພັນທີ່ມີການກຳນົດລາຄາໄວ້ເຊິ່ງສ້າງຄວາມສະດວກໃຫ້ແກ່ແຂກໃນການຊື້ແລະເພີດເພີນກັບກິດຈະກຳຂອງເຮືອນພັກແຮມປະຊາຊົນ. ໂດຍລວມແລ້ວລາຍການລວມດັ່ງກ່າວຈະປະກອບດ້ວຍພາຫະນະຂົນສົ່ງນັກທ່ອງທ່ຽວ, ທີ່ພັກອາໄສ, ອາຫານ, ກິດຈະກຳ ແລະ ການໄປທ່ຽວຊົມສະຖານທີ່.

### 4.27 ລະບົບການຈັບຈອງ

ລະບົບການໃດໜຶ່ງທີ່ເຮັດໃຫ້ສາມາດເຂົ້າເຖິງການສັ່ງຈ່ອງລາຍການເຮືອນພັກແຮມປະຊາຊົນ ແລະ ການບໍລິການເປັນຕົ້ນແມ່ນການສັ່ງຈ່ອງຜ່ານທາງອອນລາຍ (ອິນເຕີເນັດ) ຫຼື ຜ່ານທາງໂທລະສັບ.

### 4.28 ເຄືອຂ່າຍສື່ສັງຄົມອອນລາຍ

ເວັບໄຊ້ທີ່ອະນຸຍາດໃຫ້ຜູ້ທີ່ຕ້ອງການນຳໃຊ້ສາມາດລົງທະບຽນເຂົ້ານຳໃຊ້, ພ້ອມດຽວກັນນັ້ນຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ແລະ ຜູ້ບໍລິຫານຈັດການເຮືອນພັກແຮມປະຊາຊົນສາມາດບັນຈຸຂໍ້ມູນ, ລາຍລະອຽດກ່ຽວກັບເຮືອນພັກແຮມປະຊາຊົນ, ບັນຈຸຮູບພາບຕ່າງໆ ແລະ ວິດີໂອກ່ຽວກັບເຮືອນພັກແຮມປະຊາຊົນຂອງພວກຕົນ, ສົ່ງຂໍ້ຄວາມ ແລະ ຕິດຕໍ່ພົວພັນກັບລູກຄ້າຢູ່ເລື້ອຍໆ, ເພື່ອນຮ່ວມງານ ແລະ ສະມາຄົມທຸລະກິດ (ນັກທຸລະກິດ).

### 4.29 ຕະຫຼາດເປົ້າໝາຍ

ກຸ່ມລູກຄ້າເປົ້າໝາຍທີ່ຈະຕ້ອງໄດ້ພົວພັນ ແລະ ເຮັດການຕະຫຼາດນຳໂດຍກົງ.

### 4.30 ຈຸດຂາຍທີ່ເປັນເອກະລັກ

ຈຸດດຶງດູດຫຼັກຫຼືເອກະລັກສະເພາະຂອງເຮືອນພັກແຮມປະຊາຊົນ, ທີ່ເປັນຈຸດຫຼັກໃນການດຶງດູດນັກທ່ອງທ່ຽວ.

### 4.31 ບ້ານ

ເຂດຊົນນະບົດທີ່ຜູ້ຄົນອາໄສຢູ່ກັນເປັນຊຸມຊົນ ເຊິ່ງມີຄວາມໂດດເດັ່ນທາງດ້ານວັດທະນະທຳ ແລະ ຊັບພະຍາກອນທຳມະຊາດ.

# 5. ເງື່ອນໄຂ

## 5.1 ເຈົ້າພາບ

### 5.1.1 ບ້ານ ແລະ ຊຸມຊົນ

5.1.1.1 ຈະຕ້ອງມີຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຢ່າງຫນ້ອຍ 5 ຫຼັງ, ພາຍໃນບ້ານໜຶ່ງທີ່ໄດ້ຮັບການຂຶ້ນທະບຽນອະນຸຍາດເພື່ອສະແດງເຖິງການມີສ່ວນຮ່ວມໃນຊຸມຊົນ ແລະ ຄວາມສາມັກຄີ.

5.1.1.2 ເຮືອນພັກແຮມປະຊາຊົນຈະຕ້ອງຕັ້ງຢູ່ໃກ້ກັບແຫຼ່ງທ່ອງທ່ຽວທາງທຳມະຊາດ ແລະ ວັດທະນະທຳທີ່ຢູ່ບໍລິເວນອ້ອມຂ້າງ.

5.1.1.3 ບ້ານທີ່ມີປະຫວັດການບໍລິຫານຈັດການທີ່ໂດດເດັ່ນ ແລະ ມີຄວາມສວຍງາມຈະໄດ້ຮັບບູລິມະສິດໃນການຄັດເລືອກ, ເຊັ່ນການໄດ້ຮັບລາງວັນບ້ານດີເດັ່ນ ແລະ ລາງວັນທິວທັດທຳມະຊາດທີ່ສວຍງາມ.

5.1.1.4 ຈະຕ້ອງມີສະໂມສອນພາຍໃນຊຸມຊົນ ໃຊ້ເພື່ອເປັນບ່ອນປະສານງານ ແລະ ເຮັດກິດຈະກຳເຊັ່ນ: ຈັດພິທີຕ້ອນຮັບ, ການສະແດງສິລະປະ, ວັດທະນະທຳ ແລະ ອື່ນໆ.

### 5.1.2 ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ

5.1.2.1 ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຈະຕ້ອງເປັນຜູ້ທີ່ບໍ່ເຄີຍມີຄວາມຜິດທາງອາຍາມາກ່ອນ.

5.1.2.2 ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຈະຕ້ອງມີສຸຂະພາບແຂງແຮງ ແລະ ບໍ່ເປັນພະຍາດຕິດຕໍ່.

5.1.2.3 ຫລັກສູດຝຶກອົບຮົມເຮືອນພັກແຮມປະຊາຊົນຂັ້ນພື້ນຖານ ຈະຕ້ອງໄດ້ຮັບການສ້າງຂຶ້ນ, ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນທຸກຄົນ ຈະຕ້ອງເຂົ້າຮ່ວມຈົນສຳເລັດການຝຶກອົບຮົມ.

## 5.2 ທີ່ພັກເຊົາ

### 5.2.1 ເຮືອນ

5.2.1.1 ໂຄງສ້າງຂອງເຮືອນຈະຕ້ອງຢູ່ໃນສະພາບດີ, ໝັ້ນຄົງ ແລະ ປອດໄພເປັນຕົ້ນແມ່ນ: ຫຼັງຄາ, ຝາເຮືອນ, ປະຕູ, ພື້ນ ແລະ ອື່ນໆ.

5.2.1.2 ການອອກແບບແລະວັດສະດຸກໍ່ສ້າງຈະຕ້ອງສະທ້ອນເຖິງສະຖາປັດຕະຍະກຳ ແລະ ຄວາມເປັນເອກະລັກຂອງທ້ອງຖິ່ນ.

5.2.1.3 ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຈະຕ້ອງຈັດສັນຫ້ອງນອນໃຫ້ແຂກຕ່າງຫາກ, ເຊິ່ງບໍ່ແມ່ນຫ້ອງນອນຂອງຄົນພາຍໃນຄອບຄົວ.

5.2.1.4 ຈະຕ້ອງມີຫ້ອງນ້ຳ ຫລື ຫ້ອງອາບນ້ຳຢ່າງໜ້ອຍ 1 ຫອ້ງສຳລັບແຂກ, ອາດຈະຢູ່ໃນຫ້ອງນອນແຂກ ຫຼື ຢູ່ໃນເຮືອນກໍ່ໄດ້.

5.2.1.5 ເຮືອນພັກແຮມປະຊາຊົນ ຈະຕ້ອງມີໄຟຟ້າໃຊ້

5.2.1.6 ພາຍໃນເຮືອນ ຈະຕ້ອງມີນ້ຳປະປາໃຊ້ທີ່ສະອາດ ແລະ ພຽງພໍ ໄວ້ສະໜອງການໃຊ້ງານພາຍໃນເຮືອນທຸກເວລາ.

### 5.2.2 ຫ້ອງນອນ

5.2.2.1 ຈັດຫາສິ່ງອຳນວຍຄວາມສະດວກພື້ນຖານ ແລະ ເຄື່ອງຕົບແຕ່ງເຮືອນ, ໃນຫ້ອງນອນແຂກເປັນຕົ້ນແມ່ນ: ພັດລົມ, ໂຕະ, ຕູ້ຂະໜາດນ້ອຍ, ແວ່ນແຍງ, ປັກສຽບໄຟ, ມຸ້ງກັນຍຸງ ແລະ ອື່ນໆ.

5.2.2.2 ຕ້ອງຈັດສັນຫ້ອງນອນໄວ້ໃຫ້ແຂກສູງສຸດ4ຫ້ອງ ເຊິ່ງຕ້ອງເປັນຫ້ອງທີ່ບໍ່ໄດ້ນຳໃຊ້ໂດຍສະມາຊິກໃນຄອບຄົວ.

5.2.2.3 ຈັດຫາຕຽງນອນທີ່ໄດ້ມາດຕະຖານ ແລະ ເໝາະສົມເຊັ່ນ: ຕຽງດ່ຽວ ແລະ ຕຽງຄູ່ ພ້ອມເສື່ອ ແລະ ຫມອນທີ່ສະດວກສະບາຍ.

5.2.2.4 ຖ້າເປັນໄປໄດ້, ປະຕູປ່ອງຢ້ຽມຄວນຈະໃສ່ຕາໜ່າງ ເພື່ອກັນຍຸງ ຫຼື ແມງໄມ້.

5.2.2.5 ຕ້ອງປ່ຽນຜ້າປູຕຽງຕາມຄວາມຈຳເປັນ ແລະ ຫຼັງຈາກແຂກອອກແຕ່ລະຄັ້ງ, ຈະຕ້ອງປ່ຽນຜ້າປູຕຽງໃໝ່ ແລະ ສະອາດ ເພື່ອຮອງຮັບແຂກທີ່ຈະມາພັກແຮມຄັ້ງຕໍ່ໄປ.

### 5.2.3 ຫ້ອງນ້ຳ ແລະ ຫ້ອງອາບນ້ຳ

5.2.3.1 ກຽມຫ້ອງນ້ຳທີ່ເປັນວິດນັ່ງ ຫຼື ວິດນັ່ງຢອງ ຢູ່ພາຍໃນເຮືອນ ຫຼື ພາຍນອກແຕ່ບໍ່ໃຫ້ໄກຈາກຕົວເຮືອນ.

5.2.3.2 ກຽມສິ່ງອຳນວຍຄວາມສະດວກພື້ນຖານໃນຫ້ອງນ້ຳ ແລະ ຫ້ອງອາບນ້ຳ ລວມໄປເຖິງປະຕູທີ່ມີລອັກຢູ່ ໃນຫ້ອງນ້ຳ ແລະ ຫ້ອງອາບນ້ຳ.

5.2.3.3 ຕ້ອງມີນ້ຳສະອາດໃຊ້ ແລະ ພຽງພໍຕະຫຼອດເວລາ.

## 5.3 ກິດຈະກຳ

### 5.3.1 ກິດຈະກຳພາຍໃນບ້ານ ແລະ ກິດຈະກຳແບບຊຸມຊົນມີສ່ວນຮ່ວມ.

5.3.1.1 ກິດຈະກຳພາຍໃນບ້ານ ແລະ ກິດຈະກຳແບບປະຊາຊົນມີສ່ວນຮ່ວມຈະຕ້ອງເນັ້ນ ແລະ ສະແດງໃຫ້ ເຫັນເຖິງຊັບພະຍາກອນທີ່ມີຢູ່ພາຍໃນທ້ອງຖິ່ນ ເຊັ່ນ: ມໍລະດົກ ແລະ ວັດທະນະທຳທ້ອງຖິ່ນທຸລະກິດ ທ້ອງຖິ່ນ (ທຸລະກິດຂະໜາດນ້ອຍ, ການລ້ຽງສັດ, ອຸດສາຫະກຳທ້ອງຖິ່ນ, ຫັດຖະກຳ) ຊັບພະຍາກອນທຳ ມະຊາດ (ປ່າໄມ້, ແມ່ນ້ຳ, ຖ້ຳ, ໜອງ ແລະ ອື່ນໆ)

5.3.1.2 ການອອກແບບ ແລະ ການດຳເນີນກິດຈະກຳຈະຕ້ອງຊຸກຍູ້ໃຫ້ມີສ່ວນຮ່ວມລະຫ່ວາງປະຊາຊົນທ້ອງຖິ່ນ ແລະ ແຂກທີ່ມາຢ້ຽມຢາມ.

### 5.3.2 ກິດຈະກຳປິ່ນອ້ອມ

5.3.2.1 ການຢ້ຽມຊົມສະຖານທີ່ທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມໃນບໍລິເວນໃກ້ຄຽງກັບບ້ານ, ຈະຕ້ອງຖືກລວມ ເຂົ້າໃນການທ່ອງທ່ຽວເຮືອນພັກແຮມປະຊາຊົນໂດຍການຖືກເອົາເຮືອນພັກແຮມປະຊາຊົນເປັນກິດຈະ ກຳຕົ້ນຕໍ.

5.3.2.2 ຮ່ວມມືກັບບ້ານອື່ນທີ່ຢູ່ຕິດ ຫຼື ໃກ້ຄຽງກັນ ເພື່ອເພີ່ມຄວາມຫຼາກຫຼາຍໃຫ້ແກ່ກິດຈະກຳທັງເປັນການເຮັດ ໃຫ້ມີຫຼາຍພາກສ່ວນໄດ້ຮັບຜົນປະໂຫຍດ.

### 5.3.3 ຄວາມເປັນຂອງແທ້ດັ້ງເດີມ

5.3.3.1 ຊຸມຊົນທີ່ດຳເນີນກິດຈະກຳເຮືອນພັກແຮມປະຊາຊົນ ຈະຕ້ອງຮັກສາເອກະລັກ, ຄຸນຄ່າ ແລະ ວັດທະນະ ທຳດັ້ງເດີມຂອງທ້ອງຖິ່ນ, ເພື່ອເຮັດໃຫ້ນັກທ່ອງທ່ຽວໄດ້ຮຽນຮູ້ ແລະ ສຳພັດປະສົບການທີ່ແຕກຕ່າງ ແລະ ເປັນຂອງແທ້ດັ້ງເດີມ.

5.3.3.2 ອະນຸລັກ ແລະ ເຮັດໃຫ້ແຂກມີສ່ວນຮ່ວມໃນກິດຈະກຳຂອງຊຸມຊົນ ເພື່ອສະແດງໃຫ້ເຫັນເຖິງຈິດວິນ ຍານຂອງຊຸມຊົນ ແລະ ການຢູ່ຮ່ວມກັນໃນສັງຄົມ.

5.3.3.3 ອະນຸລັກການຜະລິດຫັດຖະກຳທ້ອງຖິ່ນເພື່ອສະແດງໃຫ້ເຫັນເຖິງສິລະປະທ້ອງຖິ່ນໂດຍການຈັດຕັ້ງກຸ່ມ ແລະ ສະມາຄົມວັດທະນະທຳພາຍໃນບ້ານ.

## 5.4 ການບໍລິຫານຄຸ້ມຄອງ

### 5.4.1 ການນຳພາ

5.4.1.1 ການຈັດຕັ້ງເຮືອນພັກແຮມປະຊາຊົນ ຈະຕ້ອງຖືກນຳພາໂດຍຜູ້ທີ່ມີພາວະຄວາມເປັນຜູ້ນຳສູງ ແລະ ເປັນທີ່ເຄົາລົບນັບຖືຂອງຊຸມຊົນ ເຊັ່ນ: ນາຍບ້ານ.

### 5.4.2 ການຈັດຕັ້ງ

5.4.2.1 ການຈັດຕັ້ງເຮືອນພັກແຮມປະຊາຊົນ ຈະຕ້ອງມີໂຄງຮ່າງຢ່າງເປັນລະບົບ, ກຳນົດພາລະບົດບາດ, ໜ້າທີ່ຮັບຜິດຊອບ ແລະ ຂອດການປະສານງານທີ່ຊັດເຈນ.

5.4.2.2 ການຈັດຕັ້ງເຮືອນພັກແຮມປະຊາຊົນ ຈະຕ້ອງໃຫ້ສິດອຳນາດແກ່ແມ່ຍິງ ແລະ ຊາວໜຸ່ມພາຍໃນບ້ານ.

5.4.2.3 ການຈັດຕັ້ງຂອງບ້ານຈະຕ້ອງໃຫ້ການສະໜັບສະໜູນໃນການຈັດຕັ້ງເຮືອນພັກແຮມປະຊາຊົນ ເຊິ່ງດຳເນີນແບບທຸລະກິດການຄ້າ, ແຕ່ມີຄວາມຮັບຜິດຊອບຕໍ່ສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມ.

### 5.4.3 ຖານຂໍ້ມູນ

5.4.3.1 ຖານຂໍ້ມູນກ່ຽວກັບການໃຫ້ບໍລິການເຮືອນພັກແຮມປະຊາຊົນ ສ້າງຖານຂໍ້ມູນຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນທີ່ປະກອບດ້ວຍຂໍ້ມູນເຊັ່ນ: ທີ່ຢູ່, ຈຳນວນສະມາຊິກໃນຄອບຄົວ ແລະ ພອນສະຫວັນພິເສດ, ຄວາມຮູ້ ແລະ ທັກສະໃນດ້ານຕ່າງໆ.

5.4.3.2 ຖານຂໍ້ມູນກ່ຽວກັບແຂກສ້າງລະບົບການຈອງ ແລະ ການລົງທະບຽນ ເພື່ອຄວາມສະດວກໃນການເກັບກຳຈຳນວນແຂກທີ່ມາຢ້ຽມຢາມ, ປະເທດ, ໄລຍະເວລາພັກເຊົາ ແລະ ອື່ນໆ ແລະ ຖານຂໍ້ມູນກ່ຽວກັບແຂກຈະຕ້ອງມີການເກັບກຳຄຳຄິດເຫັນ, ຄຳຕິຊົມ ແລະ ຄຳແນະນຳຈາກແຂກ.

5.4.3.3 ຖານຂໍ້ມູນຜະລິດຕະພັນສ້າງ ແລະ ປັບປຸງຊັບພະຍາກອນດ້ານການທ່ອງທ່ຽວທີ່ມີຢູ່ພາຍໃນບ້ານ ແລະ ບໍລິເວນໃກ້ຄຽງ.

### 5.4.4 ການສ້າງຄວາມເຂັ້ມແຂງ ແລະ ການຝຶກອົບຮົມ

5.4.4.1 ການຈັດຕັ້ງເຮືອນພັກແຮມປະຊາຊົນ ຈະຕ້ອງສ້າງປຶ້ມຄູ່ມື ແລະ ຄຳແນະນຳທີ່ມີລາຍລະອຽດດັ່ງລຸ່ມນີ້:

- ການຕ້ອນຮັບ ແລະ ການເບິ່ງແຍງແຂກ.
- ການລົງທະບຽນ, ການຂຽນໃບຮັບເງິນ ແລະ ການຊຳລະເງິນ.
- ສຸຂະອະນາໄມ ແລະ ຄວາມສະອາດ.
- ທັກສະໃນການສື່ສານ.
- ການວາງແຜນ, ການຈັດຕັ້ງ ແລະ ການຈັດກິດຈະກຳ.
- ການຕະຫຼາດ ແລະ ການໂຄສະນາ.
- ການເລົ່າເລື່ອງ ແລະ ທັກສະໃນການອະທິບາຍ.

5.4.4.2 ຫຼັກສູດການຝຶກອົບຮົມ ແລະ ຫົວຂໍ້ຕ່າງໆ ຈະຕ້ອງເນັ້ນໜັກການປະຕິບັດຕົວຈິງ ແລະ ການແລກປ່ຽນບົດຮຽນລະຫວ່າງຊຸມຊົນກັບຊຸມຊົນ.

### 5.4.5 ການຮ່ວມມື

5.4.5.1 ການຈັດຕັ້ງເຮືອນພັກແຮມປະຊາຊົນ ຈະຕ້ອງມີການຮ່ວມມືກັບ:

- ເຮືອນພັກແຮມປະຊາຊົນບ່ອນອື່ນ ແລະ ພາກສ່ວນເອກະຊົນ ໂດຍສະເພາະແມ່ນບັນດາບໍລິສັດທ່ອງທ່ຽວ ແລະ ໂຮງແຮມ ເພື່ອສ້າງລາຍການທ່ອງທ່ຽວຮ່ວມກັນ ແລະ ປັບປຸງການໂຄສະນາ.

- ອົງການຈັດຕັ້ງພາກລັດລັດເຊັ່ນ ອົງການທ່ອງທ່ຽວຂັ້ນສູນກາງ, ແຂວງ ແລະ ເມືອງ ເພື່ອຂໍຄວາມຊ່ວຍເຫຼືອທາງດ້ານການຝຶກອົບຮົມ, ງົບປະມານ, ການຕະຫຼາດ ແລະ ການໂຄສະນາ ແລະ ການໃຫ້ຄຳປຶກສາທາງດ້ານວິຊາການ.
- ຮ່ວມມືກັບອົງການຈັດຕັ້ງທີ່ບໍ່ແມ່ນກັບລັດຖະບານ (NGOs) ເພື່ອສ້າງແຜນຮ່ວມກັນທາງດ້ານການປົກປັກຮັກສາສິ່ງແວດລ້ອມ ແລະ ການອະນຸລັກວັດທະນະທຳ.
- ມະຫາວິທະຍາໄລ ແລະ ສະຖາບັນການສຶກສາ ເພື່ອຂໍຄວາມຊ່ວຍເຫຼືອໃນການຝຶກອົບຮົມ ແລະ ການໃຫ້ຄຳປຶກສາດ້ານວິຊາການ.

## 5.5 ທີ່ຕັ້ງ

### 5.5.1 ການເຂົ້າເຖິງ

5.5.1.1 ເຮືອນພັກແຮມປະຊາຊົນຈະຕ້ອງຕັ້ງຢູ່ບ່ອນທີ່ສາມາດເຂົ້າເຖິງໄດ້ໂດຍພາຫະນະທຸກປະເພດ.

5.5.1.2 ຕ້ອງມີປ້າຍຊີ້ບອກທີ່ຊັດເຈນ ເພື່ອບອກທາງເຂົ້າຫາບ້ານໃຫ້ແກ່ແຂກ.

## 5.6 ສຸຂະອະນາໄມ ແລະ ຄວາມສະອາດ

### 5.6.1 ເຮືອນ (ເຮືອນຄົວ, ຫ້ອງນອນ ແລະ ຫ້ອງນ້ຳ)

5.6.1.1 ຫ້ອງນອນທຸກຫ້ອງ, ເຮືອນຄົວ ແລະ ຫ້ອງນ້ຳ ຈະຕ້ອງຮັກສາຄວາມສະອາດ ແລະ ບໍ່ມີກິ່ນເໝັນ, ສິ່ງເປິເປື້ອນ, ຂີ້ຝຸ່ນ, ໄຍແມງມຸມ ແລະ ອື່ນໆ.

5.6.1.2 ພື້ນເຮືອນຄົວ ຈະຕ້ອງຖູຢ່າງເປັນປົກກະຕິ ແລະ ບໍ່ຄວນໃຫ້ຄາບເປື້ອນຕົກຄ້າງ, ການຮົ່ວໄຫຼຂອງນ້ຳ ແລະ ອື່ນໆ.

5.6.1.3 ຫ້ອງນ້ຳ, ຝັກບົວອາບນ້ຳ, ອ່າງອາບນ້ຳ ແລະ ອ່າງລ້າງມື ຈະຕ້ອງທຳຄວາມສະອາດເປັນປະຈຳ ແລະ ປາສະຈາກສິ່ງເປິເປື້ອນ, ສະໜິມ ແລະ ບໍ່ມີກິ່ນເໝັນ.

5.6.1.4 ຈະຕ້ອງໃຊ້ນ້ຳຢາຂ້າເຊື້ອເພື່ອທຳຄວາມສະອາດຫ້ອງນ້ຳໃຫ້ສະອາດ ແລະ ປາສະຈາກເຊື້ອໂລກ.

5.6.1.5 ເຈົ້າຂອງເຮືອນພັກແຮມປະຊາຊົນ ຈະຕ້ອງກະກຽມ, ສະບູ, ຢາສະຜົມ, ເຈ້ຍອະນາໄມ ແລະ ຜ້າເຊັດໂຕທີ່ສະອາດໄວ້ບໍລິການແຂກ.

### 5.6.2 ບໍລິເວນເດີ່ນບ້ານ

5.6.2.1 ຕ້ອງບໍ່ມີຂີ້ເຫຍື້ອບໍລິເວນເດີ່ນບ້ານ.

5.6.2.2 ຕ້ອງກຳຈັດແຫຼ່ງແຜ່ພັນຂອງຍຸງ ດ້ວຍການລະບາຍຮ່ອງລະບາຍນ້ຳເສຍ, ກຳຈັດພວກກະປ໋ອງທີ່ສາມາດເປັນບ່ອນແຜ່ພັນຂອງຍຸງ ແລະ ອື່ນໆ.

5.6.2.3 ມັນຈຳເປັນຢ່າງຍິ່ງທີ່ຜູ້ປະກອບການເຮືອນພັກແຮມປະຊາຊົນ ແລະ ປະຊາຊົນໃນໝູ່ບ້ານຈະຕ້ອງຊ່ວຍກັນຮັກສາທິວທັດ ແລະ ຄວາມສວຍງາມພາຍໃນບ້ານຂອງຕົນ ດ້ວຍການປະດັບປະດາຕົ້ນໄມ້ທີ່ມີຄວາມສວຍງາມທີ່ມີຢູ່ໃນພື້ນທີ່ ແລະ ສາມາດເບິ່ງແຍງຮັກສາໄດ້ງ່າຍ.

### 5.6.3 ການກະກຽມ ແລະ ປຸງແຕ່ງອາຫານ

5.6.3.1 ເຮືອນຄົວຈະຕ້ອງຢູ່ໃນສະພາບດີ, ສະອາດ ແລະ ອາກາດຖ່າຍເທສະດວກ.

5.6.3.2 ເຄື່ອງໃຊ້ໃນເຮືອນຄົວຈະຕ້ອງຢູ່ໃນສະພາບດີ, ສະອາດ ແລະ ເກັບໄວ້ໃນບ່ອນທີ່ແຫ້ງ.

5.6.3.3 ຈານ, ຈອກແກ້ວ ແລະ ອື່ນໆ ທີ່ມີການແຕກຫັກ ແລະ ມີຮອຍ ບໍ່ຄວນນຳມາໃຊ້ບໍລິການອາຫານໃຫ້ແຂກ.

5.6.3.4 ສະມະຊິກໃນຄອບຄົວທີ່ກະກຽມອາຫານ ຈະຕ້ອງມີສຸຂະອະນາໄມທີ່ດີ ແລະ ແຕ່ງກາຍສະອາດ.

5.6.3.5 ຊີ້ນ, ໄກ່, ປາ ແລະ ສ່ວນປະສົມອື່ນໆທີ່ໃຊ້ເຂົ້າໃນການກະກຽມອາຫານຈະຕ້ອງສົດສະອາດ ແລະ ມາຈາກຕະຫຼາດທ້ອງຖິ່ນ.

5.6.3.6 ການບໍລິການອາຫານ ຈະຕ້ອງມີການຫຸ້ມຫໍ່ເປັນຢ່າງດີ.

5.6.3.7 ແຂກຈະຕ້ອງໄດ້ຮັບການບໍລິການດ້ວຍນໍ້າດື່ມທີ່ອາດ ແລະ ປອດໄພເທົ່ານັ້ນ.

## 5.7 ຄວາມປອດໄພ ແລະ ການຮັກສາຄວາມປອດໄພ

### 5.7.1 ການຝຶກອົບຮົມກ່ຽວກັບຄວາມປອດໄພ

5.7.1.1 ຜູ້ຮັກສາຄວາມປອດໄພ ຈະຕ້ອງໄດ້ຮັບການຝຶກອົບຮົມຂັ້ນພື້ນຖານ ກ່ຽວກັບການປະຖົມພະຍາບານເບື້ອງຕົ້ນ ແລະ ການຊ່ວຍເຫຼືອໃນກໍລະນີສຸກເສີນ.

### 5.7.2 ຄວາມປອດໄພໃນເວລາດຳເນີນກິດຈະກຳ

5.7.2.1 ຢ່າງໜ້ອຍຄວນມີຜູ້ຮັກສາຄວາມປອດໄພ 2 ຄົນ ເພື່ອຕິດຕາມແຂກ ເພື່ອຮັບປະກັນຄວາມປອດໄພລະຫວ່າງເຮັດກິດຈະກຳເຮືອນພັກແຮມປະຊາຊົນ.

5.7.2.2 ກິດຈະກຳທາງນໍ້າເຊັ່ນ: ການລ່ອງເຮືອ, ການລ່ອງແພ ແລະ ອື່ນໆຄວນຈະກຽມພ້ອມອຸປະກອນຮັກສາຄວາມປອດໄພທີ່ເໝາະສົມ ຈັດກິດຈະກຳໄວ້ໃຫ້ແຂກທີ່ໄດ້ຮັບການເຫັນດີຈາກພາກສ່ວນກ່ຽວຂ້ອງຂອງລັດ.

5.7.2.3 ກິດຈະກຳໃດໆກໍ່ຕາມທີ່ກ່ຽວຂ້ອງກັບທ່າທຽບເຮືອ ຄວນຈະມີສິ່ງອຳນວຍຄວາມສະດວກເຊັ່ນ: ຮາວຈັບ, ພື້ນຢາງທີ່ປ້ອງກັນການມື່ນໄຫຼ ແລະ ອື່ນໆ.

5.7.2.4 ຕາມເສັ້ນທາງ ແລະ ທາງຍ່າງປ່າ ຄວນຈະມີປ້າຍເຕືອນ ແລະ ຊີ້ບອກທາງຢ່າງລະອຽດ.

### 5.7.3 ການແນະນຳກ່ຽວກັບຄວາມປອດໄພ

5.7.3.1 ແຂກຈະຕ້ອງໄດ້ຮັບການອະທິບາຍກ່ຽວກັບຄວາມປອດໄພກ່ອນ ທີ່ໄດ້ເຂົ້າຮ່ວມກິດຈະກຳຂອງເຮືອນພັກແຮມປະຊາຊົນ.

5.7.3.2 ສະໜອງແຜ່ນພັບທີ່ແນະນຳ ແລະ ຄວາມປອດໄພໃຫ້ນັກທ່ອງທ່ຽວ.

5.7.3.3 ແຂກທີ່ເຂົ້າຮ່ວມໃນກິດຈະກຳການພະຈົນໄພແບບອະນຸລັກ ຈະຕ້ອງໄດ້ລົງທະບຽນ ເພື່ອບັນທຶກຊື່ ແລະ ເບີໂທຕິດຕໍ່ ເພື່ອເປັນຂໍ້ມູນ ແລະ ສະດວກໃນການກວດກາ.

5.7.3.4 ສ້າງປຶ້ມຄູ່ມືທີ່ກຳນົດຂັ້ນຕອນ ແລະ ຄຳແນະນຳກ່ຽວກັບຄວາມປອດໄພ ເພື່ອນຳໃຊ້ເປັນຂັ້ນຕອນປະຕິບັດມາດຕະຖານ.

### 5.7.4 ການຊ່ວຍເຫຼືອໃນກໍລະນີສຸກເສີນ ແລະ ການອົບພະຍົບ

5.7.4.1 ຜູ້ຮັກສາຄວາມປອດໄພ ຈະຕ້ອງມີອຸປະກອນຊ່ວຍເຫຼືອສຸກເສີນ, ຊຸດປະຖົມພະຍາບານເບື້ອງຕົ້ນຕິດໂຕໄປນຳໃນຊ່ວງໄລຍະການເຮັດກິດຈະກຳ.

5.7.4.2 ຜູ້ຮັກສາຄວາມປອດໄພ ຈະຕ້ອງມີອຸປະກອນສື່ສານເພື່ອແຈ້ງເຕືອນເຫດການອັນຕະລາຍທີ່ກຳລັງເກີດຂຶ້ນ ຫຼື ໃນກໍລະນີແຂກໄດ້ຮັບບາດເຈັບ ຫຼື ບໍ່ສະບາຍ.

5.7.4.3 ມັນຈຳເປັນຢ່າງຍິ່ງທີ່ແຂກຕ້ອງໄດ້ມີການເຮັດການປະກັນໄພ ຫຼື ປະກັນຊີວິດໂດຍລວມເຂົ້າໃນລາຄາລາຍການທ່ອງທ່ຽວ.

5.7.4.4 ຍຶດຖື ແລະ ປະຕິບັດຕາມຂໍ້ກຳນົດດ້ານຄວາມປອດໄພຂອງປະເທດນັ້ນໆ.

### 5.8. ການຕະຫຼາດ ແລະ ການໂຄສະນາ

#### 5.8.1 ກິດຈະກຳການໂຄສະນາ

5.8.1.1 ກຳນົດ ແລະ ເຂົ້າເຖິງກຸ່ມເປົ້າໝາຍການຕະຫຼາດ ແລະ ອອກແບບລາຍການທ່ອງທ່ຽວໃຫ້ເໝາະສົມກັບຄວາມຕ້ອງການ ແລະ ຄວາມຄາດຫວັງຂອງແຂກ.

5.8.1.2 ກຳນົດຈຸດຂາຍທີ່ເປັນເອກະລັກຂອງບ້ານ ເພື່ອສ້າງຄວາມແຕກຕ່າງຈາກເຮືອນພັກແຮມປະຊາຊົນອື່ນ.

5.8.1.3 ສ້າງສິ່ງພິມໂຄສະນາເປັນຕົ້ນແມ່ນ: ແຜ່ນພັບໂຄສະນາ, ກະດານຂໍ້ມູນກ່ຽວກັບກິດຈະກຳເຮືອນພັກແຮມປະຊາຊົນ ແລະ ຊຸມຊົນ.

5.8.1.4 ຮ່ວມມືກັບອຳນາດການປົກຄອງທ້ອງຖິ່ນ ແລະ ບໍລິສັດທ່ອງທ່ຽວໃນການເຮັດການຕະຫຼາດ.

#### 5.8.2 ການຮ່ວມມືກັບບໍລິສັດທ່ອງທ່ຽວ

5.8.2.1 ຈັດທັດສະນະສຶກສາແລະເຊີນບັນດາຜູ້ປະກອບການດ້ານການທ່ອງທ່ຽວແລະບໍລິສັດທ່ອງທ່ຽວ ເພື່ອມາທົດລອງກິດຈະກຳເຮືອນພັກແຮມປະຊາຊົນ.

5.8.2.2 ເຮັດວຽກຮ່ວມກັບບໍລິສັດທ່ອງທ່ຽວທີ່ມີຊື່ສຽງ, ເພື່ອໃຫ້ພວກເຂົາເປັນທີ່ປຶກສາ ໃນການຈັດຕັ້ງເຮືອນພັກແຮມປະຊາຊົນ.

#### 5.8.3 ການເຮັດການຕະຫຼາດທາງເວັບໄຊ້

5.8.3.1 ສ້າງເວັບໄຊ້ ແລະ ນຳໃຊ້ປະໂຫຍດຈາກການສື່ສັງຄົມອອນລາຍ ເພື່ອໂຄສະນາເຮືອນພັກແຮມປະຊາຊົນອາຊຽນ ແລະ ຮັບຈອງອອນລາຍ.

5.8.3.2 ຮ່ວມມືກັບຊາວໜຸ່ມຂອງບ້ານມາເປັນຜູ້ເບິ່ງແຍງ ແລະ ປັບປຸງຂໍ້ມູນການໂຄສະນາດ້ານການທອ່ງທ່ຽວອອນລາຍຂອງບ້ານ.

### 5.9 ຫຼັກການໃນການພັດທະນາແບບຍືນຍົງ

#### 5.9.1 ຄວາມຍືນຍົງທາງດ້ານເສດຖະກິດ

5.9.1.1 ການສ້າງວຽກເຮັດງານທຳ

- ການຈັດຕັ້ງເຮືອນພັກແຮມປະຊາຊົນ ຈະຕ້ອງຮັບສະໝັກ ແລະ ຈ້າງຄົນຢູ່ໃນຊຸມຊົນ.
- ໃຫ້ລາງວັນ ຫຼື ເພີ່ມເງິນແກ່ຜູ້ມີຜົນງານ ແລະ ບໍລິການດີ ເພື່ອສ້າງແຮງຈູງໃຈໃນການເຮັດວຽກ.
- ສ້າງກອງທຶນຂະໜາດນ້ອຍເພື່ອສະໜອງທຶນໃຫ້ແກ່ສະມາຊິກຂອງບ້ານທີ່ເຫັນວ່າມີຄວາມພ້ອມ ເພື່ອໃຫ້ເຂົາເຈົ້າມາມີສ່ວນຮ່ວມໃນການດຳເນີນທຸລະກິດທີ່ກ່ຽວຂ້ອງກັບກິດຈະກຳເຮືອນພັກແຮມປະຊາຊົນ.

5.9.1.2 ການຈັດຊື້

- ການຈັດຕັ້ງເຮືອນພັກແຮມປະຊາຊົນຈະຕ້ອງຊື້ວັດຖຸດິບ ແລະ ຜະລິດຕະພັນຈາກທຸລະກິດພາຍໃນບ້ານ.
- ແນະນຳໃຫ້ນັກທ່ອງທ່ຽວຊື້ຜະລິດຕະພັນທີ່ຜະລິດຢູ່ທ້ອງຖິ່ນ ໂດຍການກຳນົດຈຸດວາງຂາຍເຄື່ອງຫັດຖະກຳຢູ່ໃນເຮືອນພັກແຮມປະຊາຊົນ ຫລື ບໍລິເວນໄກຄຽງ.

5.9.1.3 ຜະລິດຕະພັນທ້ອງຖິ່ນ / ແຫລ່ງທ່ອງທ່ຽວ

- ໂຄສະນາບຸນປະເພນີຂອງທ້ອງຖິ່ນ ແລະ ຢ້ຽມຊົມຕະຫຼາດທີ່ຢູ່ໃນບ້ານ ຫຼື ຢູ່ໃກ້ບ້ານ.
- ສະເໜີຜະລິດຕະພັນຫັດຖະກຳ ແລະ ອາຫານທ້ອງຖິ່ນໃຫ້ກັບແຂກ ພ້ອມທັງຈັດງານກ່ຽວກັບວັດທະນະທຳ ແລະ ການສະແດງສິລະປະທ້ອງຖິ່ນ.

### 5.9.2 ຄວາມຍືນຍົງທາງດ້ານສິ່ງແວດລ້ອມ

5.9.2.1 ຈຳກັດ ແລະ ຫຼຸດຜ່ອນຜົນກະທົບຈາກນັກທ່ອງທ່ຽວ ໂດຍສະເພາະແມ່ນຜົນກະທົບຕໍ່ກັບທຳມະຊາດ ແລະ ວັດທະນະທຳ.

5.9.2.2 ຫຼີກລ້ຽງການໃຫ້ນັກທ່ອງທ່ຽວໄປຮ່ວມໃນກິດຈະກຳ ທີ່ເຫັນວ່າຈະທຳລາຍພືດ ແລະ ສັດປ່າ.

5.9.2.3 ຈັດກິດຈະກຳເກັບກວດຂີ້ເຫຍື້ອຮ່ວມກັບນັກທ່ອງທ່ຽວ ຕາມບໍລິເວນແຄມທະເລ, ປ່າໄມ້ ຫຼື ຕາມແມ່ນ້ຳລຳເຊ.

5.9.2.4 ສ້າງລະບຽບການ (ສິ່ງທີ່ຄວນ ແລະ ບໍ່ຄວນເຮັດ) ກ່ຽວກັບການປະຕິບັດຕໍ່ສິ່ງມີຊີວິດໃນທຳມະຊາດ ແລະ ເຜີຍແຜ່ໃຫ້ນັກທ່ອງທ່ຽວໄດ້ຮັບຮູ້ ແລະ ນຳໄປຈັດຕັ້ງປະຕິບັດ.

5.9.2.5 ຕ້ອງຮັບປະກັນວ່າຊຸມຊົນໃນທ້ອງຖິ່ນໄດ້ຮັບການໃຫ້ຄວາມຮູ້ກ່ຽວກັບຄວາມສຳຄັນຂອງການປົກປັກຮັກສາຊີວະນາໆພັນ.

5.9.2.6 ຕ້ອງຮັບປະກັນການອອກແບບ ແລະ ການກໍ່ສ້າງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ແລະ ການບໍລິການນັ້ນໆເປັນມິດຕໍ່ສິ່ງແວດລ້ອມ.

### 5.9.3 ຄວາມຍືນຍົງທາງດ້ານວັດທະນະທຳ ແລະ ສັງຄົມ

5.9.3.1 ສ້າງສູນຂໍ້ມູນ ແລະ ສະແດງເຜີຍແຜ່ວັດທະນະທຳຢູ່ສະໂມສອນຂອງບ້ານ ແລະ ບໍລິເວນໃກ້ຄຽງເຮືອນພັກແຮມປະຊາຊົນ.

5.9.3.2 ແຈ້ງໃຫ້ແຂກຊາບກ່ຽວກັບການເຄົາລົບນັບຖືປະເພນີຂອງທ້ອງຖິ່ນ ແລະ ການວາງໂຕຢ່າງເໝາະສົມ.

5.9.3.3 ຕ້ອງຮັບປະກັນວ່າຊຸມຊົນໃນທ້ອງຖິ່ນໄດ້ຮັບຄວາມຮູ້ກ່ຽວກັບຄວາມສຳຄັນຂອງການອະນຸລັກວັດທະນະທຳຂອງຕົນ.

5.9.3.4 ຍົກເລີກການອະນຸຍາດໃຫ້ບັນດາຜູ້ໃຫ້ບໍລິການດ້ານການທ່ອງທ່ຽວ ທີ່ໂຄສະນາກິດຈະກຳທ່ອງທ່ຽວທາງເພດ ແລະ ສິ່ງເສບຕິດ.

# II

# ວິທີປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

## 1. ຄຳນຳ

ຈຸດປະສົງຂອງແບບກວດສອບເຮືອນພັກແຮມປະຊາຊົນແມ່ນເພື່ອວັດແທກປະສິດທິພາບໃນການເຮັດວຽກ ແລະ ຜົນສຳເລັດຂອງເຮືອນພັກແຮມປະຊາຊົນໃນພາກພື້ນອາຊຽນ, ຊຶ່ງກຳນົດໃນມາດຖານຄຸນນະພາບເຮືອນພັກແຮມປະຊາຊົນຂອງອາຊຽນ, ແບບກວດສອບແມ່ນຖືກປັບປຸງມາເປັນເຄື່ອງປະຕິບັດສຳລັບການຈັດຕັ້ງຂອງເຮືອນພັກແຮມປະຊາຊົນຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ແລະ ຍັງເປັນຕົວກຳນົດ ເພື່ອປະເມີນປະສິດທິພາບການເຮັດວຽກຂອງເຮືອນພັກແຮມປະຊາຊົນໃຫ້ຢູ່ໃນມາດຕະຖານເຮືອນພັກແຮມປະຊາຊົນຂອງອາຊຽນ. ການຈັດຕັ້ງເຮືອນພັກແຮມປະຊາຊົນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຍັງສາມາດນຳໃຊ້ແບບກວດສອບນີ້ເພື່ອທົດສອບໃຫ້ເຫັນຂໍ້ບົກຜ່ອງຂອງການບໍລິການຂອງຕົວເອງ ແລະ ນຳຂໍ້ບົກຜ່ອງມາປັບປຸງຄຸນນະພາບ ຂອງເຮືອນພັກແຮມປະຊາຊົນຂອງພວກເຂົາ.

ມາດຖານຫຼັກ ແລະ ມາດຖານຍ່ອຍຂອງເຮືອນພັກແຮມປະຊາຊົນ ທີ່ຖືກກຳນົດໃນແບບກວດສອບນີ້ແມ່ນຂຶ້ນກັບມາດຕະຖານເຮືອນພັກແຮມປະຊາຊົນຂອງອາຊຽນ. ມາດຕະຖານຈະຖືກຮັບຮອງຈາກບັນດາປະເທດສະມາຊິກອາຊຽນທີ່ມີຢູ່ໃນແຜນຍຸດທະສາດການທ່ອງທ່ຽວຂອງອາຊຽນ: 2011-2015 ເພື່ອສ້າງປະສົບການທີ່ມີຄຸນນະພາບໃຫ້ແກ່ຜູ້ມາຢ້ຽມຢາມໂດຍການສະແດງໃຫ້ເຫັນເຖິງຊັບພະຍາກອນທ້ອງຖິ່ນທີ່ມີຢູ່ໃນປະຈຸບັນ, ຄວາມປອດໄພ ແລະ ມີລັກສະນະດຶງດູດ.

## 2. ພາກສະເໜີ.

ມີສອງຫຼັກສູດຄິດໄລ່ທີ່ນຳໃຊ້ໃນການຄິດໄລ່ມາດຕະຖານເຮືອນພັກແຮມປະຊາຊົນຂອງອາຊຽນ, ການປັບປຸງແບບກວດສອບເຮືອນພັກແຮມປະຊາຊົນອາຊຽນແມ່ນເປັນຂັ້ນຕອນທີ່ສຳຄັນ ເພື່ອຮັບປະກັນວ່າການຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດ. ແບບກວດສອບທີ່ໄດ້ຮັບຜົນສຳເລັດຄວນຈະຮັບປະກັນວ່າແບບປະເມີນມີການຈັດຕັ້ງຢ່າງເປັນລະບົບ ແລະ ສອດຄ່ອງ ເພື່ອຕີລາຄາເຮືອນພັກແຮມປະຊາຊົນ ຢູ່ໃນມາດຕະຖານເຮືອນພັກແຮມປະຊາຊົນ ຫຼື ບໍ່. ໃນພາກສຸດທ້າຍຂອງແບບກວດສອບຈະມີຜູ້ປະເມີນ ແລະ ເຄື່ອງມື ເພື່ອໃຫ້ສອດຄ່ອງຕາມຫຼັກວິທະຍາສາດ ແລະ ເປັນຕົວຕັດສິນແບບປະເມີນຂອງຜູ້ປະເມີນ.

ນອກເໜືອຈາກທີ່ກ່າວມາຂ້າງເທິງແລ້ວ, ແບບກວດສອບຄວນສາມາດນຳໃຊ້ໃນການຈັດລະດັບ ໃນການຍອມຮັບຄຸນນະພາບຂອງເຮືອນພັກແຮມປະຊາຊົນທີ່ສະແດງຜົນອອກມາໄດ້ດີໃນແບບປະເມີນຈະໄດ້ຮັບລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

ແບບປະເມີນນີ້ຍັງສາມາດນຳໃຊ້ເພື່ອທົດສອບໃຫ້ເຫັນຂໍ້ບົກຜ່ອງທີ່ຍັງບໍ່ໄດ້ຄຸນນະພາບ, ເຊິ່ງຈະເປັນຕົວຊ່ວຍໃຫ້ຜູ້ມີສ່ວນຮ່ວມຮູ້ເຖິງຂໍ້ບົກຜ່ອງໃນປະຈຸບັນ.

## 3. ຂອບເຂດ.

ສຸມໃສ່ການພັດທະນາວິທີການແລະ ຕົວຊີ້ວັດທີ່ນຳໃຊ້ໃນຂັ້ນຕອນການປະເມີນດ້ວຍການກຳນົດຕົວຊີ້ວັດໃນມາດຕະຖານເຮືອນພັກແຮມປະຊາຊົນຂອງອາຊຽນມີ 9 ມາດຖານຫຼັກ ແລະ 27 ມາດຖານຍ່ອຍ. ມາດຖານຫຼັກມີ: ເຈົ້າພາບ, ທີ່ພັກເຊົາ, ກິດຈະກາ, ການບໍລິຫານຄຸ້ມຄອງ, ທີ່ຕັ້ງ, ສຸຂະອະນາໄມ ແລະ ຄວາມສະອາດ, ຄວາມປອດໄພ ແລະ ການຮັກສາຄວາມປອດໄພ, ການຕະຫຼາດ ແລະ ການໂຄສະນາ, ຫຼັກການໃນການພັດທະນາແບບຍືນຍົງ.

## 4. ຄຳສັບ ແລະ ຄຳນິຍາມ

ຄຳສັບ ແລະ ຄຳນິຍາມທີ່ນຳໃຊ້ໃນເຄື່ອງມືປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນແມ່ນມີດັ່ງນີ້:

### 4.1 ລາຍການກວດສອບ

ແມ່ນລາຍລະອຽດຕ່າງໆທີ່ຕ້ອງມີ ຫຼື ສິ່ງທີ່ຈະຕ້ອງໄດ້ຄຳນຶງໃນເວລາດຳເນີນການປະເມີນ.

### 4.2 ຫຼັກການ

ການກໍານົດຄຸນນະພາບ/ແມ່ນເງື່ອນໄຂທີ່ເປັນບ່ອນອີງໃຫ້ແກ່ການປະເມີນ ແລະ ການຕັດສິນໃຈ.

### 4.3 ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ

ແມ່ນທ້ອງຖິ່ນທີ່ສະໜອງເຮືອນຂອງຕົນໃຫ້ເປັນເຮືອນພັກແຮມປະຊາຊົນ.

### 4.4 ວິທີການປະເມີນຜົນ

ແມ່ນວິທີທີ່ໃຊ້ເພື່ອວັດແທກຫຼັກການທີ່ກໍານົດໃນລາຍການກວດສອບເຮືອນພັກແຮມປະຊາຊົນ.

### 4.5 ນໍ້າໜັກ

ເຄື່ອງວັດແທກໃຊ້ເພື່ອກໍານົດຄວາມສໍາຄັນ ຫຼື ບຸລິມາສິດຂອງແຕ່ລະຫຼັກການ.

## 5. ຂໍ້ກໍານົດເບື້ອງຕົ້ນຂອງການປະເມີນ

ການທີ່ເຮືອນພັກແຮມປະຊາຊົນ ໃນຂົງເຂດອາຊຽນຈະຜ່ານເຂົ້າສູ່ການປະເມີນນັ້ນ, ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ແລະ ຄະນະບໍລິຫານງານຈະຕ້ອງຜ່ານບາງຂໍ້ກໍານົດດັ່ງນີ້:

ກ. ພາຍໃນບ້ານຕ້ອງມີຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ 5 ຫຼັງຂຶ້ນໄປ.

ຂ. ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງບໍ່ເຄີຍຖືກຄະດີທາງອາຍາມາກອນ.

ຄ. ຜູ້ໃຫ້ບໍລິການເຮືອນປະຊາຊົນຕ້ອງມີໃບກວດສຸກຂະພາບເພື່ອຢັ້ງຢືນວ່າບໍ່ເປັນພະຍາດຕິດແປດ.

ໃນກໍລະນີຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຫຼື ຄະນະບໍລິຫານງານບໍ່ຜ່ານຂໍ້ກໍານົດທີ່ກ່າວມາຂ້າງເທິງນັ້ນ, ແມ່ນຈະຖືກຖອດຖອນອອກຈາກການສະເໜີຂໍມາດຕະຖານເຮືອນພັກແຮມປະຊາຊົນທັນທີ.

## 6. ຫຼັກການປະເມີນ

ໃນຂັ້ນຕອນຂອງການວັດແທກຄຸນນະພາບ ແລະ ປະສິດທິພາບໃນການເຮັດວຽກຂອງເຮືອນພັກແຮມປະ ຊາຊົນ, ມາດຕະຖານເຮືອນພັກແຮມປະຊາຊົນຂອງອາຊຽນໄດ້ນໍາໃຊ້ 9 ມາດຖານຫຼັກ ແລະ 27 ມາດຖານຍ່ອຍ ທີ່ປະກອບດ້ວຍເງື່ອນໄຂ, ດັ່ງນີ້:

**ຕາຕະລາງທີ 6.1: 9 ມາດຖານຫຼັກ ແລະ 27 ມາດຖານຍ່ອຍ**

| ມາດຖານຫຼັກ | ມາດຖານຍ່ອຍ | ຄະແນນ |
|---|---|---|
| 1. ເຈົ້າພາບ | 1.ໝູ່ບ້ານ ແລະ ຊຸມຊົນ | 3 |
| | 2.ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ | 1 |
| 2. ທີ່ພັກເຊົາ | 3.ເຮືອນ | 8 |
| | 4.ຫ້ອງນອນ | 5 |
| | 5.ຫ້ອງນໍ້າ/ຫ້ອງອາບນໍ້າ | 3 |
| 3. ກິດຈະກໍາ | 6.ກິດຈະກໍາພາຍໃນບ້ານ ແລະ ກິດຈະກໍາແບບຊຸມຊົນມີສ່ວນຮ່ວມ. | 2 |
| | 7.ກິດຈະກໍາປິ່ນອ້ອມ | 2 |
| | 8.ຄວາມເປັນຂອງແທ້ດັ້ງເດີມ | 3 |
| 4. ການບໍລິຫານຄຸ້ມຄອງ | 9.ການນໍາພາ | 1 |
| | 10.ການຈັດຕັ້ງ | 3 |
| | 11.ຂໍ້ມູນພື້ນຖານ | 3 |

| | | |
|---|---|---|
| | 12.ການສ້າງຄວາມເຂັ້ມແຂງ ແລະ ການຝຶກອົບຮົມ | 2 |
| | 13.ການຮ່ວມມື | 1 |
| 5. ສະຖານທີ່ຕັ້ງ | 14.ການເຂົ້າເຖິງ | 2 |
| 6. ສຸຂະອະນາໄມ ແລະ ຄວາມສະອາດ | 15.ເຮືອນ (ເຮືອນຄົວ, ຫ້ອງນອນ ແລະ ຫ້ອງນ້ຳ) | 5 |
| | 16.ບໍລິເວນເດີ່ນບ້ານ | 3 |
| | 17.ການກະກຽມ ແລະ ປຸງແຕ່ງອາຫານ | 7 |
| 7. ຄວາມປອດໄພ ແລະ ການຮັກສາຄວາມປອດໄພ | 18.ການຝຶກອົບຮົມຄວາມປອດໄພ | 1 |
| | 19.ຄວາມປອດໄພໃນເວລາດຳເນີນກິດຈະກຳ | 4 |
| | 20.ການແນະນຳກ່ຽວກັບຄວາມປອດໄພ | 4 |
| | 21.ການຊ່ວຍເຫຼືອໃນກໍລະນີສຸກເສີນ ແລະ ອົບພະຍົບ | 4 |
| 8. ການຕະຫຼາດ ແລະ ການໂຄສະນາ | 22.ກິດຈະກຳໂຄສະນາ | 4 |
| | 23.ການຮ່ວມມືກັບບໍລິສັດທ່ອງທ່ຽວ | 2 |
| | 24.ການເຮັດຕະຫຼາດທາງເວັບໄຊ້ | 2 |
| 9. ຫຼັກການໃນການພັດທະນາແບບຍືນຍົງ | 25.ຄວາມຍືນຍົງທາງດ້ານເສດຖະກິດ | 8 |
| | 26.ຄວາມຍືນຍົງທາງດ້ານສະພາບແວດລ້ອມ | 6 |
| | 27.ຄວາມຍືນຍົງທາງດ້ານວັດທະນະທຳ-ສັງຄົມ | 4 |
| **ລວມທັງໝົດ** | | **91** |

## 7. ການປະເມີນຜົນ

ການປະເມີນຜົນຈະໄດ້ຈັດຕັ້ງປະຕິບັດກໍຕໍ່ເມື່ອສາມາດຜ່ານ 3 ຂໍ້ກຳນົດເບື້ອງຕົ້ນຂອງການປະເມີນ. ການສັງລວມຜົນຂອງການປະເມີນແມ່ນຈະສັງລວມເອົາຈຳນວນຄຳຕອບທີ່ຖືກຕິກວ່າມີຂອງແຕ່ລະເງື່ອນໄຂ. ສ່ວນບັນດາອົງປະກອບທີ່ບໍ່ກ່ຽວຂ້ອງ, ບໍ່ເໝາະສົມ ແລະ ບໍ່ຈຳເປັນສຳລັບເຮືອນພັກແຮມປະຊາຊົນແມ່ນໃຫ້ຕິກຫ້ອງ ບໍ່ເໝາະສົມ (ເບິ່ງຕົວຢ່າງ1). ແຕ່ລະມາດຖານຫຼັກການຍັງຖືກກຳນົດນ້ຳໜັກ (%) ໂດຍອີງໃສ່ຄວາມສາຄັນ (ຕາຕະລາງທີ 7.2). ການຄິດໄລ່ຜົນຂອງການປະເມີນແບບເຕັມຮູບແບບແມ່ນສາມາດເບິ່ງໄດ້ຈາກ ຕາຕະລາງທີ 7.3 ແລະ ຂໍ້ກຳນົດສຳລັບມາດຕະຖານເຮືອນພັກແຮມປະຊາຊົນອາຊຽນແມ່ນລະບຸໄວ້ຢູ່ຂໍ້ 7.3.

**ຕົວຢ່າງ 1: ຕົວຢ່າງການປະເມີນຜົນ**

| | ມາດຖານຫຼັກ | ມາດຖານຍ່ອຍ | ເງື່ອນໄຂ | ມີ | ບໍ່ມີ | ບໍ່ເໝາະສົມ | ສູດ/ຄະແນນທັງໝົດ |
|---|---|---|---|---|---|---|---|
| 1. | ເຈົ້າພາບ | ບ້ານ ແລະ ຊຸມຊົນ | ເງື່ອນໄຂ 1 | | | | |
| | | | ເງື່ອນໄຂ 2 | | | | ຈຳນວນ ມີ ທັງໝົດ |
| | | | ເງື່ອນໄຂ 3 | | | | ຈຳນວນບໍ່ເໝາະສົມທັງໝົດ |
| | | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ | ເງື່ອນໄຂ 1 | | | | |
| | | ລວມ | 4 ເງື່ອນໄຂ | 2 | 1 | 1 | |

ການປະເມີນດັ່ງກ່າວແມ່ນໃຊ້ໄດ້ກັບທັງຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ແລະ ຄະນະບໍລິຫານງານ, ໂດຍອີງໃສ່ຫົວຂໍ້ຂອງມາດຕະຖານຫຼັກ, ດັ່ງຕາຕະລາງ 7.1

**ຕາຕະລາງທີ 7.1: ການກໍານົດຜູ້ຕອບຄໍາຖາມ**

| ຜູ້ຕອບຄໍາຖາມ | ມາດຖານ |
|---|---|
| ການຈັດຕັ້ງເຮືອນພັກແຮມປະຊາຊົນ ຫຼື ຄະນະບໍລິຫານງານ | 1. ເຈົ້າພາບ<br>2. ກິດຈະກໍາ<br>3. ການບໍລິຫານຄຸ້ມຄອງ<br>4. ທີ່ຕັ້ງ<br>5. ຄວາມປອດໄພ ແລະ ການຮັກສາຄວາມປອດໄພ<br>6. ການຕະຫຼາດ ແລະ ການໂຄສະນາ<br>7. ຫຼັກການໃນການພັດທະນາແບບຍືນຍົງ |
| ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຫຼື ຫຼັງຄາເຮືອນ | 1. ທີ່ພັກເຊົາ<br>2. ສຸຂະອະນາໄມ ແລະ ຄວາມສະອາດ |

### 7.1 ກໍານົດນໍ້າໜັກຂອງແຕ່ລະມາດຖານຫຼັກ.

ຄ່າຂອງນໍ້າໜັກຈະເປັນຕົວກໍານົດຄວາມສໍາຄັນ ຫຼື ຄວາມເປັນບູລິມະສິດຂອງແຕ່ລະມາດຖານຫຼັກເພື່ອເຮັດໃຫ້ການປະເມີນ ແລະ ເກັບຂໍ້ມູນມີຄວາມສົມດຸນກັນ, ເຊິ່ງຄ່າຈອງນໍ້າໜັກແມ່ນມີດັ່ງນີ້:

**ຕາຕະລາງທີ 7.2: ຫຼັກການ ແລະ ນໍ້າໜັກແມ່ນອີງຕາມຄວາມສໍາຄັນ ແລະ ບູລິມາສິດ.**

| ມາດຖານຫຼັກ | ນໍ້າໜັກ |
|---|---|
| 1. ກິດຈະກໍາ | 20% |
| 2. ການບໍລິຫານຄຸ້ມຄອງ | 15% |
| 3. ສຸຂາອະນາໄມ ແລະ ຄວາມສະອາດ | 15% |
| 4. ທີ່ພັກເຊົາ | 10% |
| 5. ຄວາມປອດໄພ ແລະ ການຮັກສາຄວາມປອດໄພ | 10% |
| 6. ການຕະຫຼາດ ແລະ ການໂຄສະນາ | 10% |
| 7. ຫຼັກການໃນການພັດທະນາແບບຍືນຍົງ | 10% |
| 8. ເຈົ້າພາບ | 5% |
| 9. ທີ່ຕັ້ງ | 5% |
| ລວມທັງໝົດ | 100% |

ຕາຕະລາງທີ 7.3: ຕົວຢ່າງວິທີຄິດໄລ່

| ມາດຖານຫຼັກ | ມາດຖານຍ່ອຍ | ຕົວເລກທີ່ກຳນົດ | ຕົວເລກທີ່ປະເມີນໄດ້ | ເປີເຊັນ (%) | ສູດຄິດໄລ່ |
|---|---|---|---|---|---|
| 1. ເຈົ້າພາບ | ບ້ານ ແລະ ຊຸມຊົນ<br>ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ | 4 | | 5% | $\frac{x}{4-NA}x5 = a$ |
| 2. ທີ່ພັກເຊົາ | ເຮືອນ<br>ຫ້ອງນອນ<br>ຫ້ອງນ້ຳ/ຫ້ອງອາບນ້ຳ | 14 | | 10% | $\frac{x}{14-NA}x10 = b$ |
| 3. ກິດຈະກຳ | ກິດຈະກຳພາຍໃນບ້ານ ແລະ ກິດຈະກຳແບບຊຸມຊົນມີສ່ວນຮ່ວມ.<br>ກິດຈະກຳປົ່ນອ້ອມ<br>ຄວາມເປັນເອກະລັກດັ່ງເດີມ | 7 | | 20% | $\frac{x}{7-NA}x20$ =c |
| 4. ການບໍລິຫານຄຸ້ມຄອງ | ການນຳພາ<br>ການຈັດຕັ້ງ<br>ຖານຂໍ້ມູນ<br>ການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມ<br>ການຮ່ວມມື | 10 | | 15% | $\frac{x}{10-NA}x15$ =d |
| 5. ທີ່ຕັ້ງ | ການເຂົ້າເຖິງ | 2 | | 5% | $\frac{x}{2-NA}x5$ =e |
| 6. ສຸຂະອະນາໄມ ແລະ ຄວາມສະອາດ | ເຮືອນ (ເຮືອນຄົວ, ຫ້ອງນອນ, ຫ້ອງນ້ຳ)<br>ບໍລິເວນເດີ່ນບ້ານ<br>ການກະກຽມອາຫານ | 15 | | 15% | $\frac{x}{15-NA}x15$ =f |
| 7. ຄວາມປອດໄພ ແລະການຮັກສາຄວາມປອດໄພ | ການຝຶກອົບຮົມຄວາມປອດໄພ<br>ສິ່ງອຳນວຍຄວາມສະດວກໃນການຮັກສາຄວາມປອດໄພ/ກິດຈະກຳ.<br>ການປະຖົມນິເທດກ່ຽວກັບຄວາມປອດໄພ.<br>ການຊ່ວຍເຫຼືອ ແລະ ການເຄື່ອນຍ້າຍໃນກໍລະນີສຸກເສີນ. | 13 | | 10% | $\frac{x}{13-NA}x10$ =g |

| | | | | | |
|---|---|---|---|---|---|
| 8. ການຕະຫຼາດ | ກິດຈະກຳສົ່ງເສີມການຕະຫຼາດ | 8 | | 10% | $\frac{x}{8-NA}x10$ =h |
| | ການມີສ່ວນຮ່ວມກັບຫືອໜ່ວຍທຸລະກິດທ່ອງທ່ຽວ. | | | | |
| | ການເຮັດຕະຫຼາດທາງເວັບໄຊ. | | | | |
| 9. ຫຼັກການໃນການພັດທະນາແບບຍືນຍົງ | ຄວາມຍືນຍົງທາງດ້ານເສດຖະກິດ. | 18 | | 10% | $\frac{x}{18-NA}x10$ =i |
| | ຄວາມຍືນຍົງທາງດ້ານສະພາບແວດລ້ອມ | | | | |
| | ຄວາມຍືນຍົງທາງດ້ານວັດທະນະທຳ-ສັງຄົມ. | | | | |
| ລວມທັງໝົດ | | | | 100% | a+b+c+d+e+f +g+h+i |

### 7.2 ເງື່ອນໄຂໃນການກຳນົດມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

ການກຳນັດໃຫ້ເຮືອນພັກແຮມປະຊາຊົນເປັນມາດຕະຖານອາຊຽນນັ້ນ, ເຮືອນພັກແຮມປະຊາຊົນຈະຕ້ອງມີຄຸນນະພາບ ແລະ ເປັນທີ່ຍອມຮັບຂອງອາຊຽນ, ເຊິ່ງກິດຈະກຳເຮືອນພັກແຮມປະຊາຊົນທີ່ສັງລວມຄະແນນໄດ້ 75% ຂຶ້ນໄປຈະສາມາດບັນຈຸເປັນເຮືອນພັກແຮມປະຊາຊົນອາຊຽນ, ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນເຖິງເກນຄະແນນທີ່ຈະຕ້ອງບັນລຸເພື່ອກຳນົດເປັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

**ຕາຕະລາງທີ 7.4: ລະດັບຄາດໝາຍ/ລະດັບຄຸນນະພາບ**

| ລະດັບການປະເມີນ | ເປີເຊັນ (%) |
|---|---|
| ດີເລີດ (ຜ່ານຄາດໝາຍທີ່ກຳນົດສາມາດຮັບຮອງເປັນເຮືອນພັກແຮມປະຊາຊົນອາຊຽນ) | 80-100% |
| ດີຫຼາຍ | 60-70% |
| ດີ | 40-59% |
| ປານກາງ | 20-39% |
| ບໍ່ດີ | 0-19% |

### 7.3 ຂໍ້ກຳນົດສຳລັບມາດຕະຖານເຮືອນພັກແຮມປະຊາຊົນ.

**ຕາຕະລາງທີ 7.5: ຂໍ້ກຳນົດເບື້ອງຕົ້ນຂອງການປະເມີນ**

| ລຳດັບ | ຄຳຖາມ | ມີ | ບໍ່ມີ |
|---|---|---|---|
| 1. | ຕ້ອງມີຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຢ່າງໜ້ອຍ 5 ຄອບຄົວ | | |
| 2. | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນບໍ່ເຄີຍຕ້ອງໂທດຄະດີອາຍາ | | |
| 3. | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງມີສຸຂະພາບແຂງແຮງດີ | | |

*ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຫຼື ການຈັດຕັ້ງເຮືອນພັກແຮມປະຊາຊົນບໍ່ຈໍາເປັນຕ້ອງຕື່ມຕາມຄໍາຖາມຂ້າງເທິງທັງໝົດ, ......*

**ຕາຕະລາງທີ 7.6: ມາດຖານທີ່ຄວນມີ.**

| ມາດຖານຫຼັກ | ມາດຖານຍ່ອຍ | ສິ່ງທີ່ຄວນມີ | ມີ | ບໍ່ມີ | ບໍ່ເໝາະສົມ |
|---|---|---|---|---|---|
| 1. ເຈົ້າພາບ<br>(ນໍ້າໜັກ: 5%) | ບ້ານ ແລະ ຊຸມຊົນ | ສະຖານທີ່ຕິດກັບແຫຼ່ງທ່ອງທ່ຽວທາງທໍາມະຊາດ ແລະ ສັງຄົມ.<br>>>ແຫຼ່ງທ່ອງທ່ຽວໃກ້ສຸດ.....km | | | |
| | | ຜູ້ຊະນະການແຂ່ງຂັນຂອງບ້ານ<br>>>ຊື່ລາງວັນ:..................... | | | |
| | | ມີສະໂມສອນບ້ານ/ພື້ນທີ່ໃນໝູ່ບ້ານ | | | |
| | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບຫຼັກສູດເຮືອນພັກແຮມປະຊາຊົນ | | | |
| | | ລວມ | | | |
| 2. ທີ່ພັກເຊົາ<br>(ນໍ້າໜັກ 10%) | ເຮືອນ | ໂຄງສ້າງຂອງເຮືອນແຂງແຮງ ແລະ ປອດໄພ | | | |
| | | ການອອກແບບ ແລະ ວັດສະດຸໃນການປຸກສ້າງໃຫ້ມີລັກສະນະສະຖາປັດຕິຍາກໍາທ້ອງຖິ່ນ | | | |
| | | ການແບ່ງຫ້ອງນອນຮັບແຂກ<br>>>ຈໍານວນຫ້ອງພັກຂອງແຂກ...... | | | |
| | | ຢ່າງໜ້ອຍຕ້ອງມີ 1 ຫ້ອງອາບນໍ້າ/ຫ້ອງນໍ້າສໍາລັບແຂກ.<br>>>ຈໍານວນຫ້ອງອາບນໍ້າ/ຫ້ອງນໍ້າ... | | | |
| | | ມີໄຟຟ້າໃຊ້ພາຍໃນເຮືອນ | | | |
| | | ມີນໍ້າສະອາດພຽງພໍໃຊ້ພາຍໃນເຮືອນ | | | |
| | ຫ້ອງນອນ | ສິ່ງອໍານວຍຄວາມສະດວກພື້ນຖານເຊັ່ນ: ພັດລົມ, ໂຕະ, ຕູ້ໃສ່ເຄື່ອງຂະໜາດນ້ອຍ, ແວ່ນ, ປັກສຽບໄຟ, ມຸ້ງ ຫຼື ຕະນ່າງກັນຍຸງ.<br>>>ສິ່ງອໍານວຍຄວາມສະດວກທີ່ມີ... | | | |
| | | ຫ້ອງນອນສໍາລັບແຂກບໍ່ຄວນມີເກີນ 4 ຫ້ອງ. | | | |
| | | ຕຽງນອນພ້ອມດ້ວຍຜ້າປູ ແລະ ໝອນຢູ່ໃນສະພາບດີ. | | | |
| | | ປະຕູປ່ອງຢ້ຽມຄວນໃສ່ຕະນ່າງກັນຍຸງເພື່ອກັນຍຸງ | | | |

| | | | | | |
|---|---|---|---|---|---|
| | | ຫຼື ແມງໄມ້. | | | |
| | | ບ່ອນນອນຄວນທຳຄວາມສະອາດທຸກຄັ້ງສຳລັບແຂກມາພັກ | | | |
| | ຫ້ອງນ້ຳ/ຫ້ອງອາບນ້ຳ | ວິດນັ່ງ ແລະ ວິດປ່ອງຢັ້ຢູ່ພາຍໃນ ຫຼື ນອກບ້ານ | | | |
| | | ສິ່ງອຳນວຍຄວາມສະດວກພື້ນຖານພາຍໃນຫ້ອງນ້ຳ ແລະ ຫ້ອງອາບນ້ຳ. | | | |
| | | ມີນ້ຳສະອາດໃຊ້ພຽງພໍຕະຫຼອດເວລາ | | | |
| | | ລວມ | | | |
| 3. ກິດຈະກຳ (ນ້ຳໜັກ 20%) | ກິດຈະກຳພາຍໃນບ້ານແລະກິດຈະກຳແບບຊຸມຊົນມີສ່ວນຮ່ວມ. | ສະແດງໃຫ້ເຫັນເຖິງຄວາມຫຼາກຫຼາຍອຸດົມສົມບູນຂອງຊັບພະຍາກອນທ້ອງຖິ່ນເຊັ່ນ: ມໍລະດົກ ແລະ ວັດທະນະທຳທ້ອງຖິ່ນ, ທຸລະກິດທ້ອງຖິ່ນ, ຊັບພະຍາກອນທຳມະຊາດ. | | | |
| | | ກິດຈະກຳຄວນຊຸກຍູ້ໃຫ້ມີສ່ວນຮ່ວມລະຫ່ວາງປະຊາຊົນທ້ອງຖິ່ນ ແລະ ແຂກຢ້ຽມຢາມ. | | | |
| | ກິດຈະກຳປິ່ນອ້ອມ | ຢ້ຽມຊົມສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງໃນບໍລິເວນໃກ້ຄຽງກັບໝູ່ບ້ານ. | | | |
| | | ຮ່ວມມືກັບໝູ່ບ້ານອື່ນທີ່ຢູ່ຕິດກັບ ຫຼື ໃກ້ຄຽງເພື່ອເພີ່ມຄວາມຫຼາກຫຼາຍໃຫ້ແກ່ກິດຈະກຳ. | | | |
| | ຄວາມເປັນເອກະລັກດັ້ງເດີມ | ຊຸມຊົນຍັງຄົງຮັກສາຄວາມເປັນເອກະລັກ, ສິ່ງທີ່ມີຄຸນຄ່າ, ວັດທະນາທຳ (ພາສາ, ວິທີການດຳລົງຊີວິດ....) | | | |
| | | ອະນຸລັກ ແລະ ໃຫ້ມີສ່ວນຮ່ວມໃນກິດຈະກຳຂອງຊຸມຊົນ. | | | |
| | | ອະນຸລັກສິມືຫັດຖະກຳ ແລະ ການສະແດງສິລະປະທ້ອງຖິ່ນ. | | | |
| | | ລວມ | | | |
| 4. ການບໍລິຫານຄຸ້ມຄອງ (ນ້ຳໜັກ 15%) | ການນຳພາ | ການຈັດຕັ້ງເຮືອນພັກແຮມປະຊາຊົນຄວນຈະນຳພາໂດຍຜູ້ທີ່ມີລັກສະນະເປັນຜູ້ນຳສູງ ແລະ ເປັນທີ່ເຄົາລົບນັບຖືຂອງຊາວບ້ານໃນຊຸມຊົນ | | | |
| | ການຈັດຕັ້ງ | ການຈັດຕັ້ງເຮືອນພັກແຮມປະຊາຊົນຄວນຈະມີໂຄງຮ່າງຢ່າງເປັນລະບົບທີ່ຊັດເຈນ, ມີຄວາມຮັບຜິດຊອບ ແລະ ການປະສານງານທີ່ລະອຽດ. | | | |
| | | ຄວນຈະຄຳນຶງເຖິງການສ້າງຄວາມສາມາດໃຫ້ແກ່ແມ່ຍິງ ແລະ ຊາວໜຸ່ມທ້ອງຖິ່ນ. | | | |

| | | | | | |
|---|---|---|---|---|---|
| | | ການຈັດຕັ້ງຂອງບ້ານຄວນຈະສະໜັບສະໜູນການຈັດຕັ້ງເຮືອນພັກແຮມປະຊາຊົນ. | | | |
| | ຖານຂໍ້ມູນ | ສ້າງຖານຂໍ້ມູນໃຫ້ການບໍລິການເຮືອນພັກແຮມປະຊາຊົນທີ່ປະກອບດ້ວຍຂໍ້ມູນເຊັ່ນ: ທີ່ຢູ່, ຈຳນວນສະມາຊິກໃນຄອບຄົວ ແລະ ພອນສະຫວັນພິເສດ, ຄວາມຮູ້ ແລະ ທັກສະໃນດ້ານຕ່າງໆ. | | | |
| | | ຖານຂໍ້ມູນກ່ຽວກັບແຂກຄວນຈະມີການບັນທຶກຈຳນວນແຂກຢ້ຽມຢາມ, ສັນຊາດ, ໄລຍະເວລາທີ່ມາພັກແຮມ, ຄຳຄິດເຫັນ, ຄຳຕິຊົມ ແລະ ຄຳແນະນຳຈາກແຂກ. | | | |
| | | ປັບປຸງບັນຊີຈຳນວນຊັບພະຍາກອນດ້ານການທ່ອງທ່ຽວທີ່ມີຢູ່ພາຍໃນບ້ານ ແລະ ບໍລິເວນໃກ້ຄຽງ. | | | |
| | ການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມ | ຄວນມີປື້ມຄູ່ມື ແລະ ເອກະສານແນະນຳທີ່ມີລາຍລະອຽດດັ່ງລຸ່ມນີ້:<br>ການຕ້ອນຮັບ ແລະ ການຮັບແຂກ.<br>- ການລົງທະບຽນ, ການເກັບເງິນ ແລະ ການຊຳລະເງິນ.<br>- ສຸຂະອະນາໄມ ແລະ ຄວາມສະອາດ.<br>- ທັກສະໃນການສື່ສານ.<br>- ການວາງແຜນ, ການຈັດຕັ້ງ ແລະ ການຈັດກິດຈະກຳ.<br>- ການຕະຫຼາດ ແລະ ການໂຄສະນາ.<br>- ການເລົ່າເລື່ອງ ແລະ ທັກສະໃນການອະທິບາຍ. | | | |
| | | ຫຼັກສູດການຝຶກອົບຮົມ ແລະ ເນັ້ນໜັກການປະຕິບັດຕົວຈິງ ແລະ ການແລກປ່ຽນບົດຮຽນລະຫວ່າງຊຸມຊົນກັບຊຸມຊົນ. | | | |
| | | ຄວນຈະມີການຮ່ວມມືທີ່ມີປະສິດທິພາບກັບເຮືອນພັກແຮມປະຊາຊົນໃກ້ຄຽງ,ພາກເອກະຊົນ, ພາກລັດ, ອົງການຈັດຕັ້ງສາກົນ, ສະຖາບັນການສຶກສາຊັ້ນສູງ. | | | |
| | | **ລວມ** | | | |
| 5. ທີ່ຕັ້ງ (ນໍ້າໜັກ 5%) | ການເຂົ້າເຖິງ | ທີ່ຕັ້ງຂອງເຮືອນພັກແຮມປະຊາຊົນຕອ້ງມີເສັ້ນທາງຄົມມະນາຄົມເຂົ້າເຖິງ. | | | |
| | | ຕ້ອງຕິດຕັ້ງປ້າຍຊີ້ບອກ ເພື່ອບອກທາງເຂົ້າຫາ | | | |

| | | | | | |
|---|---|---|---|---|---|
| | | ບ້ານໃຫ້ແກ່ແຂກຢ່າງລະອຽດ. | | | |
| | | ລວມ | | | |
| 6. ສຸຂະອະນາໄມ ແລະ ຄວາມສະອາດ (ນ້ຳໜັກ 15%) | ເຮືອນ (ເຮືອນຄົວ, ຫ້ອງນອນ ແລະ ຫ້ອງນ້ຳ) | ຫ້ອງນອນທຸກຫ້ອງ, ເຮືອນຄົວ ແລະ ຫ້ອງນ້ຳຄວນຈະຮັກສາຄວາມສະອາດແລະບໍ່ມີກິ່ນເໝັນ, ສິ່ງສົກກະປົກ, ຂີ້ຝຸ່ນ, ໄຍແມງມຸມ. | | | |
| | | ພື້ນເຮືອນຄົວຄວນສະອາດ. | | | |
| | | ຫ້ອງນ້ຳ, ຟັກບົວອາບນ້ຳ, ອ່າງອາບນ້ຳ ແລະ ອ່າງລ້າງມືຄວນທຳຄວາມສະອາດເປັນປະຈຳ ແລະ ປະສະຈາກສິ່ງສົເປິເປື້ອນ, ສະໜິມ ແລະ ບໍ່ມີກິ່ນເໝັນ. | | | |
| | | ໃຊ້ນ້ຳຢາຂ້າເຊື້ອເພື່ອທຳຄວາມສະອາດຫ້ອງນ້ຳໃຫ້ສະອາດ. | | | |
| | | ຄວນຈັດຕຽມ, ສະບູ, ຢາສະຜົມ, ເຈ້ຍອະນາໄມ ແລະ ຜ້າເຊັດໂຕທີ່ສະອາດໄວ້ບໍລິການແຂກ. | | | |
| | ບໍລິເວນເດີນບ້ານ | ບໍລິເວນເດີນບ້ານບໍ່ຄວນຖິ້ມຂີ້ເຫຍື້ອຊະຊາຍ. | | | |
| | | ກຳຈັດແຫຼ່ງແຜ່ພັນຂອງຍຸງ | | | |
| | | ຮັກສາທິວທັດ ແລະ ຄວາມສວຍງາມພາຍໃນບ້ານຂອງຕົນ ໂດຍການປະດັບປະດາຕົ້ນໄມ້ທີ່ມີຄວາມສວຍງາມທີ່ມີຢູ່ໃນພື້ນທີ່. | | | |
| | ການກະກຽມອາຫານ | ເຮືອນຄົວຄວນຢູ່ໃນສະພາບດີ, ສະອາດ ແລະ ອາກາດຖ່າຍເທສະດວກ. | | | |
| | | ເຄື່ອງໃຊ້ໃນເຮືອນຄົວຄວນຈະຢູ່ໃນສະພາບດີ, ສະອາດ ແລະ ເກັບໄວ້ໃນບ່ອນທີ່ແຫ້ງ | | | |
| | | ໃຊ້ພາຊະນະທີ່ສະອາດໃນການເສີບອາຫານ | | | |
| | | ສະມະຊິກໃນຄອບຄົວທີ່ກະກຽມອາຫານຄວນຈະມີສຸຂະອະນາໄມທີ່ດີ ແລະ ແຕ່ງກາຍສະອາດ. | | | |
| | | ອາຫານສົດທີ່ໃຊ້ໃນການກະກຽມອາຫານຄວນຈະສົດສະອາດ ແລະ ມາຈາກຕະຫຼາດທ້ອງຖິ່ນ. | | | |
| | | ການເສີບອາຫານຄວນຈະມີການຫຸ້ມຫໍ່ເປັນຢ່າງດີ. | | | |
| | | ມີນ້ຳດື່ມທີ່ສະອາດ ແລະ ປອດໄພ. | | | |
| | | ລວມ | | | |
| 7. ຄວາມປອດໄພ ແລະ ການຮັກສາ | ການຝຶກອົບຮົມຄວາມປອດໄພ | ຜູ້ຮັກສາຄວາມປອດໄພຄວນຈະໄດ້ຮັບການຝຶກອົບຮົມຂັ້ນພື້ນຖານກ່ຽວກັບການປະຖົມພະຍາ | | | |

| | | | | | |
|---|---|---|---|---|---|
| ຄວາມປອດໄພ (ນໍ້າໜັກ 10%) | | ບານເບື້ອງຕົ້ນ ແລະ ການຊ່ວຍເຫຼືອໃນກໍລະນີສຸກເສີນ. | | | |
| | | ຢ່າງໜ້ອຍຄວນມີຜູ້ຮັກສາຄວາມປອດໄພ 2 ຄົນເພື່ອຕິດຕາມແຂກ ເພື່ອຮັບປະກັນຄວາມປອດໄພລະຫວ່າງເຮັດກິດຈະກຳ. | | | |
| | | ກິດຈະກຳທາງນໍ້າຄວນຈະກຽມພ້ອມອຸປະກອນຮັກສາຄວາມປອດໄພທີ່ເໝາະສົມ. | | | |
| | | ຄວນຈະມີສິ່ງອໍານວຍຄວາມສະດວກເຊັ່ນ: ຮາວຈັບ, ພື້ນຍ່າງທີ່ປ້ອງກັນການມື່ນໄຫຼ. | | | |
| | | ຕາມເສັ້ນທາງຍ່າງປ່າ ຄວນຈະມີປ້າຍເຕືອນ ແລະ ຊີ້ບອກທາງຢ່າງລະອຽດ. | | | |
| | ການປະຖົມນິເທດກ່ຽວກັບຄວາມປອດໄພ | ມີການປະຖົມນິເທດກ່ຽວກັບຄວາມປອດໄພກ່ອນທີ່ຈະຮ່ວມເຮັດກິດຈະກໍາ. | | | |
| | | ສະໜອງແຜ່ນພັບທີ່ແນະນໍາເຄັດລັບ ແລະ ຄວາມປອດໄພໃຫ້ນັກທ່ອງທ່ຽວ. | | | |
| | | ແຂກທີ່ເຂົ້າຮ່ວມໃນກິດຈະກໍາການປະຈົນໄພແບບອະນຸລັກຈະຕ້ອງໄດ້ລົງທະບຽນເພື່ອບັນທຶກຊື່ ແລະ ເບີໂທຕິດຕໍ່. | | | |
| | | ນໍາໃຊ້ປຶ້ມຄູ່ມືທີ່ກໍານົດຂັ້ນຕອນ ແລະ ວິທີການຕ່າງໆກ່ຽວກັບຄວາມປອດໄພເພື່ອນໍາໃຊ້ ແລະ ເປັນຂັ້ນຕອນໜຶ່ງໃນການກໍານົດມາດຖານ. | | | |
| | ການຊ່ວຍເຫຼືອ ແລະ ການເຄື່ອນຍ້າຍໃນກໍລະນີສຸກເສີນ | ຜູ້ຮັກສາຄວາມປອດໄພຄວນມີອຸປະກອນຊ່ວຍເຫຼືອສຸກເສີນ, ຊຸດປະຖົມພະຍາບານເບື້ອງຕົ້ນ. | | | |
| | | ຜູ້ຮັກສາຄວາມປອດໄພຄວນຈະມີອຸປະກອນສື່ສານເພື່ອ? | | | |
| | | ແຂກຄວນມີປະກັນໄພ ຫຼື ປະກັນຊີວິດ. | | | |
| | | ຍຶດຖື ແລະ ປະຕິບັດຕາມຂໍ້ກໍານົດດ້ານຄວາມປອດໄພຂອງປະເທດນັ້ນໆ. | | | |
| | | **ລວມ** | | | |
| 8.ການຕະຫຼາດ ແລະ ການໂຄສະນາ (ນໍ້າໜັກ 10%) | ການໂຄສະນາກິດຈະກໍາ | ອອກແບບລາຍການທ່ອງທ່ຽວໃຫ້ເໝາະສົມກັບຄວາມຕ້ອງການ ແລະ ຄວາມຄາດຫັວງຂອງແຂກ. | | | |
| | | ດຶງເອົາຈຸດເດັ່ນທີ່ເປັນເອກະລັກອອກມາເປັນຈຸດຂາຍຂອງບ້ານເພື່ອຈໍາແນກໃຫ້ເຫັນຄວາມແຕກ | | | |

| | | | | | |
|---|---|---|---|---|---|
| | | ຕ່າງ. | | | |
| | | ສ້າງ ແລະ ປັບປຸງສິ່ງພິມໂຄສະນາເປັນຕົ້ນແມ່ນ: ແຜນພັບໂຄສະນາ, ກະດານຂໍ້ມູນກ່ຽວກັບກິດຈະກໍາ. | | | |
| | | ຮ່ວມມືກັບອໍານາດການປົກຄອງທ້ອງຖິ່ນ ແລະ ບໍລິສັດທ່ອງທ່ຽວໃນການເຮັດການຕະຫຼາດ. | | | |
| | ການມີສ່ວນຮ່ວມກັບຫົວໜ່ວຍທຸລະກິດທ່ອງທ່ຽວ | ມີການຈັດແຟມທຶບກັບບັນດາຜູ້ປະກອບການດ້ານການທ່ອງທ່ຽວ ແລະ ບໍລິສັດທ່ອງທ່ຽວ | | | |
| | | ເຮັດວຽກຮ່ວມກັບບໍລິສັດທ່ອງທ່ຽວທີ່ມີຊື່ສຽງ, ເພື່ອໃຫ້ພວກເຂົາເປັນທີ່ປຶກສາ. | | | |
| | ການເຮັດຕະຫຼາດທາງເວັບໄຊ້ | ນໍາໃຊ້ປະໂຫຍດຈາກການສື່ສານທາງອິນເຕີເນັດເພື່ອໂຄສະນາໂຮມສະເຕ ແລະ ສັ່ງຈອງອອນລາຍ. | | | |
| | | ແນະນໍາໃຫ້ມີການພັກດັນເອົາຊາວໜຸ່ມຂອງບ້ານມາເປັນຜູ້ບໍາລຸງຮັກສາ ແລະ ປັບປຸງຂໍ້ມູນການໂຄສະນາດ້ານການທອ່ງທ່ຽວທາງເວັບໄຊ. | | | |
| | | **ລວມ** | | | |
| 9. ຫຼັກການໃນການພັດທະນາແບບຍືນຍົງ (ນໍ້າໜັກ 10%) | ຄວາມຍືນຍົງທາງດ້ານເສດຖະກິດ | ການຈ້າງງານ | | | |
| | | ການຈັດຕັ້ງເຮືອນພັກແຮມປະຊາຊົນຄວນຈະຈ້າງງານພະນັກງານທີ່ແມ່ນຄົນຢູ່ໃນທ້ອງຖິ່ນເອງ. | | | |
| | | ຄວນມີການໃຫ້ລາງວັນເພື່ອສ້າງແຮງຈູງໃຈໃຫ້ແກ່ພະນັກງານ. | | | |
| | | ແນະນໍາໃຫ້ມີກອງທຶນຂະໜາດນ້ອຍ ເພື່ອສະໜອງທຶນໃຫ້ແກ່ສະມາຊິກໃນທ້ອງຖິ່ນ. | | | |
| | | ການຈັດຊື້ | | | |
| | | ແນະນໍາໃຫ້ການຈັດຕັ້ງເຮືອນພັກແຮມປະຊາຊົນຊື້ວັດສະດຸຕ່າງໆຈາກຫົວໜ່ວຍທຸລະກິດພາຍໃນທ້ອງຖິ່ນ. | | | |
| | | ແນະນໍາໃຫ້ນັກທ່ອງທ່ຽວຊື້ສິນຄ້າ ແລະ ຜະລິດຕະພັນທີ່ຜະລິດຢູ່ທ້ອງຖິ່ນ. | | | |
| | | ຈໍາໜ່າຍສິນຄ້າປະເພດເຄື່ອງຫັດຖະກໍາຢູ່ໃນບໍ ລິເວນບ້ານທີ່ບໍ່ໄກຈາກເຮືອນພັກແຮມປະຊາຊົນ. | | | |
| | | ຜະລິດຕະພັນທ້ອງຖິ່ນ/ສິ່ງດຶງດູດ | | | |
| | | ໂຄສະນາບຸນປະເພນີທ້ອງຖິ່ນ ແລະ ຢ້ຽມຊົມຕະ | | | |

| | | | | | |
|---|---|---|---|---|---|
| | | ຫຼາດໃກ້ຄຽງ. | | | |
| | | ແນະນຳໃຫ້ນັກທ່ອງທ່ຽວຊື້ສິນຄ້າ ແລະ ການບໍລິການຂອງທ້ອງຖິ່ນເຊັ່ນ: ເຄື່ອງຫັດຖະກຳດັ້ງເດີມ, ອາຫານ ແລະ ງານປະເພນີຕ່າງໆ. | | | |
| | ຄວາມຍືນຍົງທາງດ້ານສິ່ງແວດລ້ອມ | ຈຳກັດ ແລະ ຫຼຸດຜົນກະທົບຈາກນັກທ່ອງທ່ຽວ ໂດຍສະເພາະຕໍ່ສະພາບແວດລ້ອມທາງທຳມະຊາດ ແລະ ວັດທະນະທຳທີ່ບອບບາງ. | | | |
| | | ຫຼີກລ້ຽງການໃຫ້ນັກທ່ອງທ່ຽວໄປຮ່ວມໃນກິດຈະກຳ ທີ່ເຫັນວ່າຈະທຳລາຍພືກສາສາດ ແລະ ສັດປ່າ. | | | |
| | | ຈັດກິດຈະກຳເກັບກວດຂີ້ເຫຍື້ອຮ່ວມກັບນັກທ່ອງທ່ຽວຕາມບໍລິເວນແຄມທະເລ, ປ່າໄມ້ ຫຼື ຕາມແມ່ນ້ຳລຳເຊ. | | | |
| | | ສ້າງລະບຽບການ (ສິ່ງທີ່ຄວນ ແລະ ບໍ່ຄວນເຮັດ) ກ່ຽວກັບການປະຕິບັດຕໍ່ສິ່ງມີຊີວິດໃນທຳມະຊາດເຜີຍແຜ່ໃຫ້ນັກທ່ອງທ່ຽວໄດ້ຮັບຮູ້. | | | |
| | | ຕອ້ງຮັບປະກັນວ່າຊຸມຊົນໃນທ້ອງຖິ່ນໄດ້ຮັບການໃຫ້ຄວາມຮູ້ກ່ຽວກັບຄວາມສຳຄັນຂອງການປົກປັກຮັກສາຊີວະນາໆພັນ. | | | |
| | | ອອກແບບ ແລະ ການກໍ່ສ້າງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ແລະ ການບໍລິການນັ້ນໆເປັນມິດຕໍ່ສິ່ງແວດລ້ອມ. | | | |
| | ຄວາມຍືນຍົງທາງດ້ານວັດທະນະທຳສັງຄົມ | ສ້າງສູນຂໍ້ມູນ ແລະ ສະແດງເຜີຍແຜ່ວັດທະນະທຳຢູ່ສະໂມສອນຂອງບ້ານ ແລະ ບໍລິເວນໃກ້ຄຽງເຮືອນພັກແຮມປະຊາຊົນ | | | |
| | | ແຈ້ງໃຫ້ແຂກຊາບກ່ຽວກັບການເຄົາລົບນັບຖືປະເພນີຂອງທ້ອງຖິ່ນ ແລະການວາງໂຕຢ່າງເໝາະສົມ. | | | |
| | | ຊຸມຊົນໃນທ້ອງຖິ່ນໄດ້ຮັບຄວາມຮູ້ກ່ຽວກັບຄວາມສຳຄັນຂອງການອະນຸລັກວັດທະນະທຳຂອງຕົນ. | | | |
| | | ຫ້າມບໍ່ໃຫ້ມີການເຂົ້າຮ່ວມກິດຈະກຳທາງເພດ ແລະ ສິ່ງເສບຕິດ. | | | |
| | | ລວມ | | | |

ຕາຕະລາງທີ 7.7: ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຕົວຢ່າງວິທີການຄິດໄລ່ຂອງຜູ້ປະເມີນ.

ຕາຕະລາງທີ 7.7: ສະຫຼຸບແບບປະເມີນ

| ມາດຖານຫຼັກ | ມາດຖານຍ່ອຍ | ຄະແນນ | ຄະແນນເຕັມ | ເປີເຊັນ | ສູດຄິດໄລ່ |
|---|---|---|---|---|---|
| 1.ເຈົ້າພາບ | ໝູ່ບ້ານ ແລະ ຊຸມຊົນ | 4 | 4 | 5 | $\frac{3}{4-0}x5 = 3.75\%$ |
| | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ | | | | |
| 2.ທີ່ພັກເຊົາ | ເຮືອນ | 14 | 14 | 10 | $\frac{12}{14-0}x10 = 7.5\%$ |
| | ຫ້ອງນອນ | | | | |
| | ຫ້ອງນ້ຳ/ຫ້ອງອາບນ້ຳ | | | | |
| 3.ກິດຈະກຳ | ກິດຈະກຳພາຍໃນບ້ານ ແລະ ກິດຈະກຳແບບຊຸມຊົນມີສ່ວນຮ່ວມ. | 7 | 7 | 20 | $\frac{6}{7-1}x20 = 20\%$ |
| | ກິດຈະກຳປິ່ນອ້ອມອ້ອມ | | | | |
| | ຄວາມເປັນຂອງແທ້ດັ່ງເດີມ | | | | |
| 4.ການບໍລິຫານຄຸ້ມຄອງ | ການນຳພາ | 10 | 10 | 15 | $\frac{6}{10-0}x15 = 9\%$ |
| | ການຈັດຕັ້ງ | | | | |
| | ຖານຂໍ້ມູນ | | | | |
| | ການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມ | | | | |
| | ການຮ່ວມມື | | | | |
| 5.ທີ່ຕັ້ງ | ການເຂົ້າເຖິງ | 2 | 2 | 5 | $\frac{2}{2-0}x5 = 5\%$ |
| 6.ສຸຂະອະນາໄມ ແລະ ຄວາມສະອາດ | ເຮືອນ (ເຮືອນຄົວ, ຫ້ອງນອນ ແລະ ຫ້ອງນ້ຳ) | 15 | 15 | 15 | $\frac{14}{15-1}x15 = 15\%$ |
| | ບໍລິເວນເດີ່ນບ້ານ | | | | |
| | ການກະກຽມ ແລະ ປຸງແຕ່ງອາຫານ | | | | |
| 7.ຄວາມປອດໄພ ແລະ ການຮັກສາຄວາມປອດໄພ | ການຝຶກອົບຮົມກ່ຽວກັບຄວາມປອດໄພ | 13 | 13 | 10 | $\frac{8}{13-0}x10 = 3.15\%$ |
| | ຄວາມປອດໄພໃນເວລາດຳເນີນກິດຈະກຳ | | | | |
| | ການແນະນຳກ່ຽວກັບຄວາມປອດໄພ | | | | |
| | ການຊ່ວຍເຫຼືອໃນກໍລະນີສຸກເສີນ ແລະ ອົບພະຍົບ | | | | |
| 8.ການຕະຫຼາດ ແລະການໂຄສະນາ | ກິດຈະກຳການໂຄສະນາ | | | | |
| | ການຮ່ວມມືກັບບໍລິສັດທ່ອງທ່ຽວ | | | | |
| | ການມີສ່ວນຮ່ວມກັບຫົວ | | | | |

| | | | | | |
|---|---|---|---|---|---|
| | ໜ່ວຍທຸລະກິດທ່ອງທ່ຽວ | 8 | 8 | 10 | $\frac{7}{8-0}x10 = 8.75\%$ |
| | ການເຮັດຕະຫຼາດທາງເວັບໄຊ້ | | | | |
| 9.ຫຼັກການໃນການພັດທະນາແບບຍືນຍົງ | ຄວາມຍືນຍົງທາງດ້ານເສດຖະກິດ | 18 | 18 | 10 | $\frac{10}{18-0}x10 = 5.88\%$ |
| | ຄວາມຍືນຍົງທາງດ້ານສິ່ງແວດລ້ອມ | | | | |
| | ຄວາມຍືນຍົງທາງດ້ານວັດທະນະທຳ-ສັງຄົມ | | | | |
| ລວມທັງໝົດ | | 91 | 91 | 100 | **81.03%** |

| | |
|---|---|
| ດີເລີດ (ຜ່ານຄາດໝາຍທີ່ກຳນົດ ແລະ ສາມາດຮັບຮອງເປັນເຮືອນພັກແຮມປະຊາຊົນອາຊຽນ) | 80-100% |
| ດີຫຼາຍ | 60-79% |
| ດີ | 40-59% |
| ປານກາງ | 20-39% |
| ບໍ່ດີ | 0-19% |

III

# ຂັ້ນຕອນການປະເມີນ ແລະ ຫນ່ວຍງານຢັ້ງຢືນມາດຕະຖານ ເຮືອນພັກແຮມປະຊາຊົນອາຊຽນ

## 1. ຄຳນຳ

ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ (ASEAN Homestay Standard – AHS) ແມ່ນໜຶ່ງໃນແຜນຍຸດທະສາດໃນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍແຜນຍຸດທະສາດການທ່ອງທ່ຽວອາຊຽນ (ASEAN Tourism Strategic Plan – ATSP) 2011-2015 ໂດຍມີຈຸດປະສົງ ເພື່ອຍົກລະດັບຄຸນນະພາບການບໍລິການ ແລະ ຊັບພະຍາກອນມະນຸດໃນເຂດພາກພື້ນ. ຈຸດປະສົງຂອງຂັ້ນຕອນການປະເມີນ ແລະ ຫນ່ວຍງານອອກໃບຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນນີ້ແມ່ນເພື່ອສ້າງຂັ້ນຕອນການປະເມີນທີ່ໄດ້ມາດຕະຖານພ້ອມທັງກຳນົດພາກສ່ວນຮັບຜິດຊອບ ໃນການຄຸ້ມຄອງການຈັດຕັ້ງປະຕິບັດລາຍການກວດກາຂອງມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

ເອກະສານສະບັບນີ້ແມ່ນເພື່ອປະກອບເຂົ້າໃນເອກະສານແນະນຳ ຫຼື ຄູ່ມືໃນການປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ເຊິ່ງຈະຖືກນຳໃຊ້ໂດຍຜູ້ປະເມີນທີ່ໄດ້ຮັບການແຕ່ງຕັ້ງ ເພື່ອດຳເນີນການປະເມີນເຮືອນພັກແຮມປະຊາຊົນ ແລະ ຢັ້ງຢືນໃຫ້ໄດ້ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

ບັນດາເງື່ອນໄຂຫລັກ, ເງື່ອນໄຂຍ່ອຍ ແລະ ເງື່ອນໄຂພື້ນຖານຕ່າງໆທີ່ໄດ້ກຳນົດໄວ້ຢູ່ໃນລາຍການກວດກາຂອງມາດຕະຖານສະບັບນີ້ແມ່ນອີງໃສ່ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ທີ່ໄດ້ຮັບການຮັບຮອງຈາກບັນດາປະເທດສະມາຊິກອາຊຽນ. ພ້ອມດຽວກັນນັ້ນບັນດາປະເທດສະມາຊິກອາຊຽນຈະຕ້ອງໄດ້ຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຮມປະຊາຊົນອາຊຽນຕາມທີ່ໄດ້ລະບຸ ແລະ ແນະນຳໃນແຜນຍຸດທະສາດການທ່ອງທ່ຽວອາຊຽນ (ATSP) ເພື່ອຍຸກລະດັບຄຸນນະພາບການບໍລິການເຮືອນພັກແຮມປະຊາຊົນໃຫ້ສູງຂຶ້ນ ໂດຍໃຫ້ນັກທ່ອງທ່ອງທ່ຽວໄດ້ຮັບຮູ້ເຖິງຄວາມຕື່ນຕາຕື່ນໃຈ, ຄວາມບັນເທີງ, ຄວາມຮູ້, ຄວາມປອດໄພ ແລະ ຄວາມຊົງຈຳທີ່ດີຕໍ່ການບໍລິການເຮືອນພັກແຮມປະຊາຊົນ.

## 2. ພາກສະເໜີ

ການສ້າງຂັ້ນຕອນການປະເມີນ ແລະ ຫນ່ວຍງານຢັ້ງຢືນຂອງມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ແມ່ນມີຄວາມສຳຫຼາຍເພາະເປັນການຮັບປະກັນເຖິງຄວາມສຳເລັດໃນການຈັດຕັ້ງປະຕິບັດມາດຕະຖານດັ່ງກ່າວ. ເອສະສານສະບັບນີ້ໄດ້ອະທິບາຍຂັ້ນຕອນໃນການກວດກາ, ພາກສ່ວນຮັບຜິດຊອບໃນຄຸ້ມຄອງ ແລະ ດຳເນີນການປະເມີນ ແລະ ລວມເຖິງຜົນປະໂຫຍດທີ່ເຈົ້າຂອງເຮືອນຈະໄດ້ຮັບພາຍຫຼັງທີ່ໄດ້ຮັບການຢັ້ງຢືນໃຫ້ເປັນເຮືອນພັກແຮມທີ່ໄດ້ຕາມມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ. ທ້າຍສຸດແລ້ວ, ເອກະສານນີ້ມີເປົ້າຫມາຍເຮັດໃຫ້ຜູ້ປະເມີນມີຄວາມຮູ້ ແລະ ທັກສະຄວາມສາມາດທີ່ພຽງພໍ ເພື່ອການປະເມີນເຮືອນພັກແຮມປະຊາຊົນໃຫ້ມີຄວາມຖືກຕ້ອງ ລວມທັງການບໍລິຫານຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຮມປະຊາຊົນອາຊຽນທີ່ເປັນລະບົບອີກດ້ວຍ.

## 3. ຂອບເຂດ

ມາດຕະຖານສະບັບນີ້ແມ່ນມີຂອບເຂດໃນການນຳໃຊ້ ດັ່ງນີ້:

- ສ້າງຂັ້ນຕອນການກວດສອບ/ປະເມີນສຳລັບມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ
- ກຳນົດໂຄງສ້າງ ແລະ ພາກສ່ວນຮັບຜິດຊອບໃນການຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ
- ສ້າງຄູ່ມື ແລະ ຄຳແນະນຳ ເພື່ອເປັນບ່ອນອີງໃນການດຳເນີນການປະເມີນສຳລັບຜູ້ປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

## 4. ຄຳສັບ ແລະ ຄຳນິຍາມ

ຄຳສັບ ແລະ ຄວາມໝາຍທີ່ຢູ່ໃນມາດຕະຖານສະບັບນີ້ ປະກອບມີດັ່ງນີ້:

### 4.1 ປະເທດສະມາຊິກອາຊຽນ (ASEAN Member States-AMS)

ອາຊຽນ(ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້)ປະກອບດ້ວຍປະເທດສະມາຊິກທັງໝົດ 10 ປະເທດ ໄດ້ແກ່: ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ. (ສະຖິຕິປີ 2013).

### 4.2 ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

ພາກສ່ວນທີ່ຮັບຜິດຊອບໃນການຄຸ້ມຄອງ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊົນທີ່ໄດ້ຮັບການປະເມີນແລະ ຢັ້ງຢືນຕາມມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

### 4.3 ຄູ່ມື/ຄຳແນະນຳໃນການປະເມີນ

ແມ່ນເອກະສານທີ່ເປັນເຄື່ອງມື ທີ່ຊ່ວຍໃຫ້ຜູ້ປະເມີນດຳເນີນການປະເມີນເຮືອນພັກແຮມປະຊາຊົນທີ່ມີທ່າແຮງ ໄດ້ຢ່າງຖືກຕ້ອງ ແລະ ມີຄວາມສອດຄອງ.

### 4.4 ຂັ້ນຕອນການກວດກາ

ແມ່ນການສ້າງຂະບວນການໃນການປະເມີນໃຫ້ເປັນລະບົບເພື່ອໃຫ້ການປະເມີນມີຄວາມຊັດເຈນ, ຍຸດຕິທຳ ແລະ ເປັນຫຼັກຖານໃຫ້ແກ່ການປະເມີນ.

### 4.5 ໜ່ວຍງານອອກໃບຢັ້ງຢືນ

ໝາຍເຖິງພາກສ່ວນ ຫຼື ໜ່ວຍງານທີ່ເຮັດໜ້າທີ່ອອກ ແລະ ຄຸ້ມຄອງການອອກໃບຢັ້ງຢືນ

### 4.6 ລາຍການກວດກາ

ໝາຍເຖິງລາຍການກວດກາຕ່າງໆທີ່ຖືກຈັດລຽງເປັນລະບົບຢູ່ໃນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ເພື່ອດຳເນີນການປະເມີນ

### 4.7 ອົງການ/ໜ່ວຍງານການທ່ອງທ່ຽວຂອງລັດ (ກະຊວງ ຖວທ)

ໝາຍເຖິງອົງການ/ໜ່ວຍງານຂອງລັດທີ່ຮັບຜິດຊອບໃນການວາງແຜນພັດທະນາ, ຄຸ້ມຄອງ ແລະ ໂຄສະນາການທ່ອງທ່ຽວຢູ່ໃນລະດັບຕ່າງໆ. (ຂັ້ນສູນກາງ-ທ້ອງຖິ່ນ).

### 4.8 ໜ່ວຍງານເຮືອນພັກແຮມປະຊາຊົນ

ໝາຍເຖິງພາກສ່ວນ/ໜ່ວຍງານທີ່ເຮັດໜ້າທີ່ໃນການວາງແຜນ, ຄຸ້ມຄອງການດຳເນີນກິດຈະກຳເຮືອນພັກແຮມ ປະຊາຊົນຢູ່ໃນຊຸມຊົນ/ບ້ານ.

### 4.9 ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ

ໝາຍເຖິງປະຊາຊົນຢູ່ໃນຊຸມຊົນ/ບ້ານ ທີ່ດຳເນີນກິດຈະກຳໃຫ້ບໍລິການແກ່ນັກນັກທ່ອງທ່ຽວມານອນພັກແຮມຢູ່ ເຮືອນຂອງຕົນເອງ ໂດຍຖືກຕ້ອງຕາມລະບຽບການ.

## 5. ໜ່ວຍງານຢັ້ງຢືນມາດຕະຖານ

ພາກສ່ວນທີ່ປະກອບເຂົ້າຢູ່ໃນໂຄງຮ່າງການຈັດຕັ້ງຂອງຄະນະຮັບຜິດຊອບ ໃນການຢັ້ງຢືນມາດຕະຖານແມ່ນຈະ ເຮັດໜ້າທີ່ໃນການອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຮມປະຊາຊົນອາຊຽນຢູ່ໃນແຕ່ ລະປະເທດສະມາຊິກອາຊຽນ ຊຶ່ງປະກອບດ້ວຍ 5 ພາກສ່ວນໄດ້ແກ່:

# 5 ພາກສ່ວນທີ່ສະເໜີປະກອບເປັນຄະນະຮັບຜິດຊອບ

ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະພາກສ່ວນປະກອບມີດັ່ງນີ້:

- ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກການທ່ອງທ່ຽວ (ກະຊວງ ຖວທ)
- ອົງການຈັດຕັ້ງສາກົນ (ທີ່ເຮັດວຽກກ່ຽວກັບການທ່ອງທ່ຽວ)
- ໜ່ວງານຂອງລັດທີ່ຮັບຜິດຊອບວຽກສາທາລະນະສຸກ (ກະຊວງສາທາລະນະສຸກ)
- ໜ່ວງານຂອງລັດທີ່ຮັບຜິດຊອບວຽກປ້ອງກັນຄວາມສະຫງົບ (ກະຊວງປ້ອງກັນຄວາມສະຫງົບ)
- ໜ່ວງານຂອງລັດທີ່ຮັບຜິດຊອບວຽກສິ່ງແວດລ້ອມ (ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**ຕາຕະລາງ 5.1. ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະພາກສ່ວນ ທີ່ຢູ່ໃນໂຄງຮ່າງການອອກໃບຢັ້ງຢືນ**

| ພາກສ່ວນ | ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ |
|---|---|
| ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກການທ່ອງທ່ຽວ (ຂັ້ນສູນກາງ-ທ້ອງຖິ່ນ) | ເປັນປະທານ/ຫົວໜ້າຄະນະປະເມີນມາດຕະຖານເຮືອນພັກແຮມປະ ຊາຊົນອາຊຽນຂອງແຕ່ລະປະເທດ |
| | ຮັບ ແລະ ພິຈາລະນາແບບຟອມສະໝັກທີ່ສົ່ງເຂົ້າມາ |
| | ປະເມີນໂດຍນຳໃຊ້ເງື່ອນໄຂຕ່າງໆທີ່ຢູ່ໃນມາດຕະຖານ |
| | ໃຫ້ຄຳປຶກສາແກ່ພາກສ່ວນຕ່າງໆ ກ່ຽວກັບເຮືອນພັກແຮມປະຊົນທີ່ເຫັນວ່າມີທ່າແຮງ ແລະ ມີເງື່ອນໄຂທີ່ຈະບັນລຸມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ |
| ອົງການຈັດຕັ້ງສາກົນ (ທີ່ເຮັດວຽກກ່ຽວກັບການທ່ອງທ່ຽວ) | ໃຫ້ຄວາມຮ່ວມມື ແລະ ຊ່ວຍເຫຼືອກັບພາກລັດໃນການດຳເດີນການປະເມີນ |
| ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກສາທາລະນະສຸກ (ກະຊວງສາທາລະນະສຸກ) | ປະເມີນ ແລະ ປະກອບຄຳຄິດເຫັນທີ່ກ່ຽວຂ້ອງກັບສຸຂະອານາໄມ ແລະ ຄວາມສະອາດ |
| ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກປ້ອງກັນຄວາມສະຫງົບ (ກະຊວງປ້ອງກັນຄວາມສະຫງົບ) | ປະເມີນ ແລະປະກອບຄຳຄິດເຫັນທີ່ກ່ຽວຂ້ອງກັບຄວາມປອດໄພ ແລະ ຄວາມສະຫງົບ |
| ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກສິ່ງແວດລ້ອມ (ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) | ປະເມີນ ແລະ ປະກອບຄຳຄິດເຫັນທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ແລະ ຄວາມຍືນຍົງ |
| ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກການທ່ອງທ່ຽວ (ຂັ້ນສູນກາງ, ກະຊວງ ຖວທ) | ສ້າງຕັ້ງຄະນະກຳມະການປະເມີນມາດຕະຖານເຮືອນພັກແຮມປະຊາຊົນ |
| | ຮັບເອົາບົດລາຍງານການປະເມີນຈາກຂັ້ນທ້ອງຖິ່ນ ແລະ ລາຍງານໃຫ້ຄະນະຮັບຜິດຊອບຂອງອາຊຽນ |
| ປະເທດສະມາຊິກອາຊຽນ | ຮັບຮອງເອົາຜົນຂອງການປະເມີນ |
| | ອອກໃບຢັ້ງຢືນໃຫ້ແກ່ຜູ້ສະໝັກທີ່ບັນລຸຕາມມາດຕະຖານ |

ເພື່ອເຮັດໃຫ້ຂະບວນການກວດສອບມີຄວາມວ່ອງໄວຂຶ້ນ, ອົງການ/ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກການ

ທ່ອງທ່ຽວ (ກະຊວງ ຖວທ) ແມ່ນຈະຕ້ອງສ້າງຕັ້ງຄະນະກຳມະການປະເມີນມາດຕະຖານເຮືອນພັກແຮມປະຊາຊົນຂັ້ນສູນກາງ/ທ້ອງຖິ່ນຂຶ້ນເພື່ອຈັດຕັ້ງປະຕິບັດການປະເມີນເຮືອນພັກແຮມປະຊາຊົນ ທີ່ເຫັນວ່າມີທ່າແຮງຢູ່ໃນແຂວງຂອງຕົນ. ຊຶ່ງຜູ້ທີ່ຈະປະກອບເຂົ້າໃນຄະນະກຳມະການປະເມີນແມ່ນສາມາດມາຈາກພາກລັດ ແລະ ພາກທຸລະກິດ, ແຕ່ຫົວໜ້າຄະນະຕ້ອງແມ່ນບຸກຄົນທີ່ມາຈາກພາກລັດ.

ໜ່ວຍງານຂອງລັດທີ່ຮັບຜິດຊອບວຽກການທ່ອງທ່ຽວ (ກະຊວງ ຖວທ), ສາທາລະນະສຸກ (ກະຊວງສາທາລະນະສຸກ), ປ້ອງກັນຄວາມສະຫງົບ (ກະຊວງປ້ອງກັນຄວາມສະຫງົບ), ສິ່ງແວດລ້ອມ (ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແມ່ນພາກສ່ວນທີ່ສະເໜີປະກອບເປັນຄະນະກຳມະການປະເມີນມາດຕະຖານ ເຮືອນພັກແຮມປະຊາຊົນອາຊຽນ ດັ່ງທີ່ສະແດງໃນຕາຕະລາງ 5.1.

ຄະນະກຳມະການປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ແມ່ນຈະຕ້ອງເຮັດໜ້າທີ່ໃນການປະເມີນເຮືອນພັກແຮມປະຊາຊົນຕາມທີ່ໄດ້ການມອບໝາຍ ແລະ ລາຍງານຜົນຂອງການປະເມີນໃຫ້ຄະນະຮັບຜິດຊອບໃນການຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນຮັບຊາບ, ຫຼັງຈາກນັ້ນ, ຄະນະຮັບຜິດຊອບໃນການຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ລາຍງານຜົນຕໍ່ກອງປະຊຸມອາຊຽນເພື່ອຂໍການຮັບຮອງ.

ໂຄງຮ່າງຂອງຄະນະຮັບຜິດຊອບຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ




ຕົວຢ່າງ, ພາກສ່ວນທີ່ຈະປະກອບເຂົ້າໃນຄະນະຮັບຜິດຊອບຢັ້ງຢືນມາດຕະຖານ ເຮືອນພັກແຮມປະຊາຊົນອາຊຽນ ແລະ ຄະນະກຳມະການປເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ດັ່ງທີ່ສະແດງໃນຕາຕະລາງທີ 5.2 ໂດຍອີງໃສ່ໂຄງສ້າງທາງດ້ານການປົກຄອງຂອງແຕ່ລະປະເທດທີ່ແຕກຕ່າງກັນຢູ່ໃນອາຊຽນ.

ຕາຕະລາງ 5.2. ຕົວຢ່າງ ຄະນະຮັບຜິດຊອບຍັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ແລະ ຄະນະກຳມະການປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນຂອງແຕ່ລະປະເທດສະມາຊິກ

| ລ/ດ | ຫົວຂໍ້ | ພາກສ່ວນທີ່ຖືກສະເໜີ | ພາກສ່ວນ |
|---|---|---|---|
| 1. | ເຈົ້າພາບ | ພາກລັດ (ທີ່ຮັບຜິດຊອບການທ່ອງທ່ຽວ) | ກະຊວງ ຖວທ |
| 2. | ທີ່ພັກເຊົາ | ອົງການຈັດຕັ້ງສາກົນ | ສະມາຄົມໂຮງແຮມ |
| 3. | ກິດຈະກຳ | ອົງການຈັດຕັ້ງສາກົນ | ສະມາຄົມທຸລະກິດທ່ອງທ່ຽວ |
| | | | ສະມາຄົມພະນັກງານນຳທ່ຽວ |
| 4. | ການບໍລິຫານຄຸ້ມຄອງ | ພາກລັດ (ທີ່ຮັບຜິດຊອບການທ່ອງທ່ຽວ) | ກະຊວງ ຖວທ |
| 6. | ສຸຂະອານາໄມ ແລະ ຄວາມສະອາດ | ພາກສ່ວນທີ່ເຮັດໜ້າທີ່ຮັບຜິດຊອບສຸຂະອານາໄມ ແລະ ຄວາມສະອາດ | ກະຊວງສາທາລະນະສຸກ |
| | | | ໜ່ວຍງານບໍລິການສັງຄົມ |
| 7. | ຄວາມປອດໄພ ແລະ ການຮັກສາຄວາມປອດໄພ | ພາກສ່ວນທີ່ເຮັດໜ້າທີ່ຮັບຜິດຊອບກ່ຽວກັບຄວາມປອດໄພ ແລະ ຄວາມສະຫງົບ | ໜ່ວຍງານກູ້ໄພ |
| | | | ກະຊວງປ້ອງກັນປະເທດ |
| | | | ກະຊວງປ້ອງກັນຄວາມສະຫງົບ |
| 8. | ການຕະຫຼາດ ແລະ ການໂຄສະນາ | ພາກລັດ (ທີ່ຮັບຜິດຊອບການທ່ອງທ່ຽວ) | ກະຊວງ ຖວທ, ພະແນກ ຖວທ |
| 9. | ຫຼັກການພັດທະນາແບບຍືນຍົງ | | |
| | 9.1 ວັດທະນະທຳ-ສັງຄົມ | ພາກສ່ວນທີ່ຮັບຜິດຊອບກ່ຽວກັບວັດທະນະທຳ-ສັງຄົມ | ກະຊວງ ຖວທ |
| | | | ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ |
| | 9.2 ສິ່ງແວດລ້ອມ | | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| | | | ອົງການຈັດຕັ້ງສາກົນ (ທີ່ເຮັດວຽກກ່ຽວກັບສິ່ງແວດລ້ອມ) |

## 5.1 ຂັ້ນຕອນການຈັດຕັ້ງປະຕິບັດການກວດສອບມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

ການຈັດຕັ້ງປະຕິບັດການກວດສອບມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ຈະຕ້ອງປະຕິບັດຕາມຂັ້ນຕອນດັ່ງທີ່ສະແດງໃນຕາຕະລາງ 5.2:

ຕາຕະລາງ 5.2. ຂັ້ນຕອນການຈັດຕັ້ງປະຕິບັດການກວດສອບ




## 5.2 ລາຍການປະເມີນສຳລັບຜູ້ປະເມີນ

ລາຍການປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນສຳລັບຜູ້ປະເມີນ ແມ່ນໄດ້ອະທິບາຍຢູ່ໃນຂໍ້ທີ 5.3 ຊຶ່ງສະແດງໃຫ້ເຫັນແຕ່ລະຂັ້ນຕອນທີ່ຜູ້ປະເມີນຈະຕ້ອງໄດ້ປະຕິບັດ.

### ຕາຕະລາງ 5.3. ລາຍການປະເມີນສຳລັບຜູ້ປະເມີນ




## 5.3 ຄວາມຕ້ອງການເບື້ອງຕົ້ນ

ກ່ອນທີ່ຈະດຳເນີນການປະເມີນ, ຄະນະກຳມະການປະເມີນຕ້ອງຮັບປະກັນວ່າບັນດາຜູ້ສະໝັກແມ່ນໄດ້ຕາມເງື່ອນໄຂຂັ້ນພື້ນຖານ, ຖ້າບໍ່ໄດ້ຕາມເງື່ອນໄຂ, ຜູ້ສະໝັກກໍຈະບໍ່ໄດ້ບການນຳມາພິຈາລະນາໃນການສະໝັກຮັບລາງວັນເຮືອນພັກແຮມປະຊາຊົນອາຊຽນ.

ລາຍການເງື່ອນໄຂຂັ້ນພື້ນຖານສຳລັບຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນອາຊຽນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນອາຊຽນ ດັ່ງທີ່ສະແດງໃນຂໍ້ທີ 5.3.

ຕາຕະລາງ 5.3: ເງື່ອນໄຂພື້ນຖານສຳລັບຜູ້ສະໝັກ ແລະ ສິ່ງທີ່ຜູ້ປະເມີນຕ້ອງເຮັດ

| ເຮືອນພັກແຮມປະຊາຊົນ | ເງື່ອນໄຂພື້ນຖານ | ສິ່ງທີ່ຈະຕ້ອງເຮັດ |
|---|---|---|
| ຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນອາຊຽນ | ບ້ານຕ້ອງມີຜູ້ໃຫ້ບໍລິການເຮືອນພັກແຮມຢ່າງໜ້ອຍ 5 ຫຼັງ | ຖ່າຍຮູບໃບຢັ້ງຢືນແລ້ວຕິດໃສ່ແບບຟອມສະໝັກ |
| | ການໃຫ້ບໍລິການເຮືອນພັກແຮມປະຊາຊົນຢ່າງໜ້ອຍຕ້ອງ 2 ປີຂຶ້ນໄປ | |
| ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນອາຊຽນ | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງບໍ່ເຄີຍມີຄະດີຕ່າງໆ | ມີໃບແຈ້ງໂທດທີ່ຖືກຕ້ອງຕາມທາງການຈາກພາກສ່ວນທີ່ກ່ຽວຂ້ອງ |
| | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງມີສຸຂະພາບທີ່ແຂງແຮງ | ມີໃບຢັ້ງຢືນສຸຂະພາບທີ່ຖືກຕ້ອງຕາມທາງການຈາກພາກສ່ວນທີ່ກ່ຽວຂ້ອງ |
| | | ຜູ້ໃຫ້ບໍລິການເຮືອນພັກແຮມປະຊົນທຸກຄົນຕ້ອງໄດ້ຂຽນແບບຟອມເພື່ອຂໍການປະເມີນ |

## 6. ຂັ້ນຕອນການກວດກາ

ການກວດສອບເຮືອນພັກແຮມປະຊາຊົນ ແມ່ນຂັ້ນຕອນໜຶ່ງທີ່ມີຄວາມສຳຄັນ ເພາະເປັນການກຳນົດ ແລະ ລະບຸເຮືອນໃດທີ່ມີທ່າແຮງ ແລະ ຄວາມເປັນໄປໄດ້ໃນການທີ່ຈະສະໝັກຮັບລາງວັນເຮືອນພັກແຮມປະຊາຊົນອາຊຽນ. ການສະເໜີຂັ້ນຕອນການກວດສອບແມ່ນກຳນົດຂຶ້ນ ໂດຍອີງຕາມຂັ້ນຕອນຂອງການປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ຊຶ່ງບັນດາປະເທດສະມາຊິກໄດ້ຈັດຕັ້ງປະຕິບັດ. ດັ່ງນັ້ນ, ການສະເໜີການກວດສອບແມ່ນມີຄວາມເໝາະສົມກັບທຸກໆປະເທດສະມາຊິກອາຊຽນ.

**ການສະເໜີການກວດສອບປະກອບມີ 3 ຂັ້ນຕອນ ເຊັ່ນ:**

**ຂັ້ນຕອນທີ 1: ການເຜີຍແຜ່ຂໍ້ມູນມາດຕະຖານ**

ກ່ອນທີ່ຈະຈັດຕັ້ງປະຕິບັດຂັ້ນຕອນອື່ນໆ, ພາກສ່ວນທີ່ກ່ຽວຂ້ອງຂອງລັດ (ພາກສ່ວນທີ່ຮັບຜິດຊອບມາດຕະຖານ) ຕ້ອງຈັດຝຶກອົບຮົມ, ກອງປະຊຸມ, ງານສຳມະນາ. ເພື່ອເຜີຍແຜ່ຂໍ້ມູນກ່ຽວກັບມາດຕະຖານເຮືອນພັກແຮມປະຊາຊົນອາຊຽນໃຫ້ແກ່ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນໄດ້ຮັບຮູ້ ແລະ ມີຄວາມຕື່ນຕົວ.

ພາກສ່ວນທີ່ກ່ຽວຂ້ອງຂອງລັດ (ພາກສ່ວນທີ່ຮັບຜິດຊອບມາດຕະຖານ) ຂັ້ນທ້ອງຖິ່ນດຳເນີນການຄັດເລືອກເຮືອນພັກແຮມປະຊົນທີ່ເຫັນວ່າມີເງື່ອນໄຂ ແລະ ທ່າແຮງໃນການສະເໜີຮັບລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

**ຂັ້ນຕອນທີ 2: ດຳເນີນການປະເມີນ**

ຄະນະກຳມະການປະເມີນມາດຕະຖານ ເຮືອນພັກແຮມປະຊົນຂັ້ນທ້ອງຖິ່ນຕ້ອງໄດ້ດຳເນີນການປະເມີນ ໂດຍອີງຕາມລາຍການກວດສອບ, ຄູ່ມືແນະນຳຂອງມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ໂດຍວິທີການຕ່າງໆ ເຊັ່ນ: ການລົງພື້ນທີ່ຕົວຈິງເພື່ອກວດສອບ, ການສອບຖາມ (ສຳພາດ), ການສຶກສາຕາມເອກະສານຕ່າງໆ. ການລົງປະເມີນແມ່ນຄວນແຈ້ງໃຫ້ຜູ້ໃຫ້ບໍລິການເຮືອນພັກແຮມຮູ້ກ່ອນລ່ວງໜ້າ.

ພາຍຫຼັງປະເມີນສຳເລັດແລ້ວ, ຄະນະກຳມະການປະເມີນມາດຕະຖານເຮືອນພັກແຮມປະຊິນຂັ້ນທ້ອງຖິ່ນຕ້ອງໄດ້ເຮັດບົດລາຍງານການປະເມີນພ້ອມທັງຄັດຕິດເອກະສານທີ່ກ່ຽວຂ້ອງ ແລ້ວສົ່ງມາຍັງຄະນະຮັບຜິດຊອບຂັ້ນສູນກາງ ເພື່ອພິຈາລະນາ  ແລະ ກວດສອບ ຊຶ່ງອາດຈະໃຊ້ເວລາປະມານ 4 ອາທິດ (1 ເດືອນ).

### ຂັ້ນຕອນທີ 3: ການຮັບຮອງ

ຄະນະຮັບຜິດຊອບຂັ້ນສູນກາງ ນຳສະເໜີຜົນຂອງການປະເມີນ ແລະ ລາຍຊື່ຜູ້ທີ່ບັນລຸຕາມເງື່ອນໄຂຂອງມາດຕະຖານໃນກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ ເພື່ອພິຈາລະນາໃນການຮັບຮອງ. ສຳລັບຜູ້ທີ່ໄດ້ຮັບການຮັບຮອງຈາກອາຊຽນຈະໄດ້ຮັບໃບຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ແລະ ແຜ່ນປ້າຍມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

### ຮູບພາບສະແດງຂັ້ນຕອນການກວດສອບ 6.1.

### ຮູບພາບ 6.1. ຮູບພາບສະແດງການສະເໜີການກວດສອບສຳລັບມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ



### 6.1 ເຮືອນພັກແຮມປະຊາຊົນທີ່ບໍ່ຜ່ານການປະເມີນ.

ສຳລັບເຮືອນພັກແຮມປະຊາຊົນທີ່ບໍ່ຜ່ານການປະເມີນ (ບໍ່ບັນລຸຕາມເງື່ອນໄຂຂອງມາດຕະຖານ), ຜູ້ປະເມີນຈະໃຫ້ຄຳແນະນຳ ແລະ ແບບຟອມເພື່ອປັບປຸງຄືນ ໂດຍສະເພາະບັນດາເງື່ອນໄຂທີ່ບໍ່ຜ່ານເກນຕາມມາດຕະຖານໄດ້ກຳນົດໄວ້ຊ່ວງໄລຍະເວລາໃນການປັບປຸງປະມານ 1–6 ເດືອນ. ຖ້າຫາກຜູ້ສະໝັກໄດ້ປັບປຸງຄືນແລ້ວ ແລະ ມີຄວາມຕ້ອງການຢາກສະໝັກກໍສາມາດສົ່ງແບບຟອມໃຫ້ທາງຄະນະກຳມະການປະເມີນມາດຕະຖານ ເຮືອນພັກແຮມປະຊາຊົນອາຊຽນຂັ້ນແຂວງເພື່ອປະເມີນຄືນ. ສຳລັບການປະເມີນຄືນນີ້ ແມ່ນຈະປະເມີນສະເພາະແຕ່ເງື່ອນໄຂທີ່ບໍ່ຜ່ານເກນໃນການປະເມີນຄັ້ງຜ່ານມາເທົ່ານັ້ນ. ດັ່ງທີ່ຂັ້ນຕອນການປະເມີນຄືນໄດ້ສະແດງໃນຮູບພາບທີ 6.2.

ຮູບພາບ 6.2. ການປະເມີນຄືນເຮືອນພັກແຮມປະຊາຊົນທີ່ບໍ່ຜ່ານການປະເມີນ




### 6.2 ເຮືອນພັແຮມປະຊາຊົນທີ່ຜ່ານການປະເມີນ

ສຳລັບເຮືອນພັກແຮມປະຊາຊົນທີ່ຜ່ານການປະເມີນ (ສາມາດບັນລຸຕາມເງື່ອນໄຂຂອງມາດຕະຖານ) ແລະ ໄດ້ຮັບການຮັບຮອງຈາກບັນດາປະເທດສະມາຊິກອາຊຽນ ແມ່ນຈະໄດ້ຮັບໃບຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນພ້ອມທັງແຜ່ນປ້າຍມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ.

ຕົວຢ່າງໃບຢັ້ງຢືນເຮືອນພັກແຮມປະຊາຊົນອາຊຽນ




ຕົວຢ່າງແຜນປ້າຍເຮືອນພັກແຮມປະຊາຊົນອາຊຽນ




## 7. ວິທີການປະເມີນ

ຈຸດປະສົງຂອງມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ເພື່ອຍົກລະດັບຄຸນນະພາບຂອງການໃຫ້ບໍລິການເຮືອນພັກແຮມປະຊາຊົນ ແລະ ດຶງດູດນັກທ່ອງທ່ຽວທີ່ມີຄຸນນະພາບມາໃຊ້ບໍລິການ. ບັນດາເຮືອນພັກແຮມປະຊາຊົນທີ່ໄດ້ຮັບລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນແລ້ວ ກໍສາມາດຍົກລະດັບລາຄາການໃຫ້ບໍລິການທີ່ສູງຂຶ້ນໂດຍໃຫ້ເໝາະສົມກັບຄຸນນະພາບຂອງການບໍລິການ. ການດຳເນີນການປະເມີນ, ຜູ້ປະເມີນຕ້ອງໄດ້ແຍກລະຫວ່າງຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຊຶ່ງທັງສອງພາກສ່ວນແມ່ນຕ້ອງສາມາດບັນລຸຕາມເງື່ອນໄຂທີ່ວາງໄວ້ ເພື່ອທີ່ຈະສະເໜີເຂົ້າຮັບລາງວັນເຮືອນພັກແຮມປະຊາຊົນອາຊຽນ.

ກ່ອນທີ່ຈະສະເໜີເຂົ້າຮັບລາງວັນເຮືອນພັກແຮມປະຊາຊົນອາຊຽນໄດ້ນັ້ນ, ຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງຄົບຕາມເງື່ອນໄຂທີ່ຕ້ອງການດັ່ງລຸ່ມນີ້:

1) ຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນຕ້ອງຜ່ານຄະນະແນນທີ່ກຳນົດໄວ້ ຫຼື (56.25%) ຂຶ້ນໄປ ຈຶ່ງສາມາດບັນລຸເງື່ອນໄຂມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ
2) ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຕ້ອງຜ່ານຄະນະແນນທີ່ກຳນົດໄວ້ ຫຼື (18.75%) ຂຶ້ນໄປ ຈຶ່ງສາມາດບັນລຸເງື່ອນໄຂມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ
3) ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງຜ່ານຄະນະແນນທີ່ກຳນົດ ຕ່ຳສຸດ 5 ຫຼັງ (ເຮືອນ) ຂຶ້ນໄປ ຈຶ່ງສາມາດບັນລຸເງື່ອນໄຂມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ
4) ຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງຜ່ານຄະນະແນນທີ່ກຳນົດຕ່ຳສຸດ 5 ຫຼັງ (ເຮືອນ) ຂຶ້ນໄປ ຈຶ່ງສາມາດບັນລຸເງື່ອນໄຂມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ, ຖ້າຫາກຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ຫຼື ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນບໍ່ຜ່ານເງື່ອນໄຂທີ່ກຳນົດໄວ້ນັ້ນ (ຕ່ຳກວ່າ 75%), ເຮືອນພັກແຮມປະຊາຊົນນັ້ນກໍບໍ່ສາມາດທີ່ຈະສະເໜີເຂົ້າຮັບລາງວັນໄດ້.

ຮູບພາບ 7.1. ວິທີການປະເມີນເຮືອນພັກແຮມປະຊາຊົນອາຊຽນ




## 8. ຄວາມຮັບຜິດຊອບຂອງຄະນະປະເມີນຜົນ

ພາກສ່ວນທີ່ປະກອບຢູ່ໃນໂຄງຮ່າງຄະນະຮັບຜິດຊອບໃນການຢັ້ງຢືນມາດຕະຖານມີ 5 ພາກສ່ວນ ຊຶ່ງຈະຕ້ອງໄດ້ປະເມີນແຕ່ລະເງື່ອນໄຂໂດຍອີງຕາມພາລະບົດບາດຂອງຕົນເອງ ເພື່ອເຮັດໃຫ້ການປະເມີນມີຄວາມເຊື່ອຖືໄດ້. ເຊິ່ງຄວາມຮັບຜິດຊອບຂອງຄະນະປະເມີນຜົນແມ່ນສະແດງໃຫ້ເຫັນດັ່ງຮູບພາບທີ 8.1.

ຮູບພາບ 8.1: ການແບ່ງຄວາມຮັບຜິດຊອບຄະນະປະເມີນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ




## 9. ອາຍຸການນຳໃຊ້

ລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນມີອາຍຸການນຳໃຊ້ 3 ປີ, ດັ່ງນັ້ນ, ເຮືອນພັກແຮມປະຊາຊົນທີ່ໄດ້ຮັບລາງວັນອາຊຽນແມ່ນຈະຕ້ອງໄດ້ປະເມີນຄືນທຸກໆ 3 ປີ, ຖ້າຫາກເຮືອນພັກແຮມປະຊາຊົນນັ້ນຍັງສາມາດຮັກສາເງື່ອນໄຂໄວ້ໄດ້ກໍຈະໄດ້ຮັບໃບຢັ້ງຢືນສະບັບໃໝ່. ດັ່ງນັ້ນ, ພາກສ່ວນທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດມາດຕະຖານເຮືອນພັກແຮມປະຊາຊົນອາຊຽນຂອງແຕ່ລະປະເທດຕ້ອງໄດ້ເອົາໃຈໃສ່ໃນການຕາມຕາມກວດກາ ແລະ ປະເມີນຄືນຢ່າງເປັນປົກ ກະຕິກັບຮືອນພັກແຮມປະຊາຊົນ ທີ່ໄດ້ຮັບລາງວັນອາຊຽນໄປແລ້ວນັ້ນ.

## 10. ຜົນປະໂຫຍດທີ່ຈະໄດ້ຮັບ

ເຮືອນພັກແຮມປະຊາຊົນທີ່ໄດ້ຮັບລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ແມ່ນມີໂອກາດທີ່ຈະໄດ້ຮັບຜົນປະໂຫຍດຫຼາຍກວ່າເຮືອນພັກແຮມປະຊາຊົນທີ່ບໍ່ໄດ້ມາດຕະຖານ ເປັນຕົ້ນແມ່ນການໂຄສະນາເຂົ້າເຖິງກຸ່ມຕະຫຼາດ (ນັກທ່ອງທ່ຽວ), ເປັນຕົ້ນແມ່ນເປັນທີ່ຮູ້ຈັກໃນພາກພື້ນອາຊຽນ ໃນຖານະໄດ້ຮັບລາງວັນລະດັບອາຊຽນ ແລະ ເຮັດໃຫ້ນັກທ່ອງທ່ຽວມີຄວາມເຊື່ອໝັ້ນຫຼາຍຂຶ້ນ.

**ຜົນປະໂຫຍດທີ່ຈະໄດ້ຮັບ:**

- ໄດ້ຮັບໃບຢັ້ງຢືນ ແລະ ແຜ່ນປ້າຍລາງວັນເຮືອນພັກແຮມປະຊາຊົນອາຊຽນ
- ຈະໄດ້ລົງໂຄສະນາຢູ່ໃນເວບໄຊການທ່ອງທ່ຽວຂອງອາຊຽນ (http://www.asean.org)
- ຈະໄດ້ຮັບການໂຄສະນາຢູ່ໃນເວທີງານຕ່າງໆໃນລະດັບອາຊຽນ ແລະ ສາກົນ
- ໄດ້ຮັບບຸລິມະສິດໃນການໂຄສະນາຢູ່ໃນເວບໄຊການທ່ອງທ່ຽວຂອງປະເທດ
- ໄດ້ຮັບບຸລິມາສິດໃນການເຂົ້າຮ່ວມງານສຳມະນາ, ງານສະແດງການທ່ອງທ່ຽວໃນລະດັບຊາດ, ອາຊຽນແລະສາກົນ
- ໄດ້ຮັບບຸລິມະສິດໃນການເຂົ້າຮ່ວມຝຶກອົບຮົມ (ພະນັກງານນຳທ່ຽວ...)

ຜົນປະໂຫຍດທີ່ຈະໄດ້ຮັບແມ່ນອາດຈະມີຄວາມແຕກຕ່າງກັນ ໂດຍອີງຕາມນະໂຍບາຍຂອງແຕ່ລະປະເທດ

## 11. ໂລໂກ້ມາດຕະຖານ

ໂລໂກມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ຄືດັ່ງຮູບພາບຂ້າງລຸ່ມນີ້.

**ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ**

**2013-2015**

**(ແຫຼ່ງຂໍ້ມູນ: ປຶ້ມມາດຕະຖານການທ່ອງທ່ຽວອາຊຽນ, 2007)**

ໂລໂກມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ແມ່ນນຳໃຊ້ໂລໂກມາດຕະຖານການທ່ອງທ່ຽວອາຊຽນ, ຊຶ່ງມີຄວາມໝາຍດັ່ງນີ້:

1. ດອກໄມ້ຄ້າຍຄືດອກບົວໝາຍເຖິງ:
   - ພືດໃນຕຳນານ, ກໍໃຫ້ເກີດຄວາມເບີກບານມ່ວນຊື່ນ, ຄວາມສະຫງົບ ແລະ ຄວາມສວຍງາມ
   - ການຮັບຮູ້ການໄດ້ຮັບລາງວັນ ແລະ ການຈັດລະດັບມາດຕະຖານການບໍລິການດ້ານການທ່ອງທ່ຽວອາຊຽນ
2. ກີບດອກບົວອ້ອມເຄື່ອງໝາຍອາຊຽນ ໝາຍເຖິງຄວາມເປັນໜຶ່ງດຽວ, ຄວາມປານີປານີປະນອມຂອງບັດດາປະເທດສະມາຊິກອາຊຽນ
3. ເງົາສີຂຽວທີ່ມີສີແຕກຕ່າງກັນ ໝາຍເຖິງການປົກປັກຮັກສາສິ່ງແວດລ້ອມ, ຄວາມອຸດົມສົມບູນ, ການຂະຫຍາຍຕົວ, ການເພີ່ມຂຶ້ນຂອງຜະລິດຕະພັນໃນອຸດສາຫະກຳທ່ອງທ່ຽວ.

## 12. ໃບຢັ້ງຢືນ ແລະ ແຜ່ນປ້າຍລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ

ເຮືອນພັກແຮມປະຊາຊົນທີ່ຮັບລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນຈະໄດ້ຮັບໃບຢັ້ງຢືນ ແລະ ແຜນປ້າຍລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ. ຊຶ່ງຕົວຢ່າງໃບຢັ້ງຢືນດັ່ງຮູບພາບຂ້າງລຸ່ມນີ້.




ໃບຢັ້ງຢືນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນແມ່ນຈະລົງລາຍເຊັນໂດຍປະທານອາຊຽນ ແລະ ລັດຖະມົນການທ່ອງທ່ຽວຂອງແຕ່ລະປະເທດ.

ແຜນປ້າຍລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນແມ່ນແກະສະຫຼັກໃສ່ແຜ່ນໂລຫະທີ່ເປັນສີຄໍາ ແລະ ຕິດໃສ່ແຜ່ນໄມ້ ຊຶ່ງມີຂະໜາດ 20.5 cm x 15.5 cm.



## 13. ແບບຟອມປະເມີນ

ແບບຟອມທີ່ຈະຊຸ້ເຂົ້າໃນການປະເມີນປະກອບມີ 2 ແບບຟອມໄດ້ແກ່ ແບບຟອມປະເມີນຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ. ຊຶ່ງຜູ້ປະເມີນຈະຕ້ອງໄດ້ປະເມີນທັງ 2 ພາກສ່ວນໂດຍການຕື່ມແບບຟອມໃຫ້ຄົບຖ້ວນ. ຕົວຢ່າງການຕື່ມແບບຟອມປະເມີນ ດັ່ງທີ່ສະແດງໃນຮູບພາບທີ 13.1 ສ່ວນຄຳແນະນຳໃນການປະເມີນແມ່ນໃຫ້ເບິ່ງຢູ່ໃນຂໍ້ທີ 14 (ຄຳແນະນຳການປະເມີນເຮືອນພັກແຮມປະຊາຊົນອາຊຽນ)

| ແບບຟອມສຳລັບຜູ້ໃຫ້ບໍລິການ | ເນື້ອໃນ | ແບບຟອມສຳລັບຄະນະຮັບຜິດຊອບ |
|---|---|---|
| ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ<br>ມາດຕະຖານເຮືອນພັກແຮມ ປະຊາຊົນອາຊຽນ<br>ແບບຟອມປະເມີນສຳລັບຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ | ເນື້ອໃນ<br>• ຂໍ້ມູນຜູ້ປະເມີນ<br>• ຂໍ້ມູນເຮືອນພັກແຮມປະຊາຊົນ<br>• ເງື່ອນໄຂເບື້ອງຕົ້ນ<br>• ເງື່ອນໄຂທີ່ຕ້ອງປະເມີນ<br>• ໃບຄະແນນປະເມີນ<br>• ເອກະສານຄັດຕິດ | ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ<br>ມາດຕະຖານເຮືອນພັກແຮມ ປະຊາຊົນອາຊຽນ<br>ແບບຟອມປະເມີນສຳລັບ ຄະນະຮັບຜິດຊອບເຮືອນພັກແຮມ ປະຊາຊົນ |

**ຮູບພາບ 13.1. ຕົວຢ່າງແບບຟອມການປະເມີນ**

### 1.0. ສະຖານທີ່ພັກ

| ລ/ດ | ເງື່ອນໄຂທີ່ຕ້ອງການ | ຜ່ານ | ບໍ່ |
|---|---|---|---|
| 1.1 | ສະພາບເຮືອນ | | |
| | 1.1.1. ສະພາບໂຄງສ້າງຂອງເຮືອນຢູ່ໃນສະພາບທີ່ດີ ແລະ ໝັ້ນຄົງ | √ | ■ |



ໝາຍເຫດ:
- ສະພາບໂຄງສ້າງໜາແໜ້ນ, ໝັ້ນຄົງ
- ບໍ່ພົບບ່ອນເປເພ, ແຕກແຫງ

| ລ/ດ | ເງື່ອນໄຂທີ່ຕ້ອງການ | ຜ່ານ | ບໍ່ |
|---|---|---|---|
| | 1.1.2. ການອອກແບບສະແດງໃຫ້ເຫັນເຖິງຄວາມເປັນເອກະລັກຂອງ | √ | ■ |



ໝາຍເຫດ:
- ການອອກແບບເຮືອນບໍ່ເປັນເອກະລັກຂອງທ້ອງຖິ່ນ
- ແບບຂອງເຮືອນເປັນແບບທັນສະໄໝ

| ລ/ດ | ເງື່ອນໄຂທີ່ຕ້ອງການ | ຜ່ານ | ບໍ່ |
|---|---|---|---|
| | 1.1.3. ຢ່າງຕ່ຳ ມີຫ້ອງນອນ 1 ຫ້ອງ ແລະ ຫ້ອງນ້ຳ 1 ຫ້ອງ ສຳລັບແຂກທີ່ມາພັກເຊົາຈຳນວນຫ້ອງນອນ ແລະ ຫ້ອງນ້ຳ | √ | ■ |



ໝາຍເຫດ:

ຫ້ອງນ້ຳ 1 ຫ້ອງ ສຳລັບແຂກ

## 14. ຄໍາແນະນໍາການປະເມີນເຮືອນພັກແຮມປະຊາຊົນອາຊຽນ

ຄໍາແນະນໍາການປະເມີນເຮືອນພັກແຮມປະຊາຊົນອາຊຽນແມ່ນການອະທິບາຍເພີ່ມເຕີມແຕ່ລະເງື່ອນໄຂ ເພື່ອສ້າງຄວາມສະດວກ ແລະ ເຂົ້າໃຈງ່າຍໃຫ້ແກ່ຜູ້ປະເມີນເມື່ອດໍາເນີນການປະເມີນຕົວຈິງ ຊຶ່ງຜູ້ປະເມີນຈະຕ້ອງໄດ້ປະເມີນທຸກເງື່ອນໄຂທັງຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ໂດຍໃຊ້ຫຼາກຫຼາຍວິທີໃນການປະເມີນເຊັ່ນ:

i) IV – ສໍາພາດ

ii) DR – ການສຶກສາເອກະສານຕ່າງໆທີ່ກ່ຽວຂ້ອງ

iii) SI – ລົງກວດກາຕົວຈິງ

ຕາຕະລາງ 14.1 ສະແດງກ່ຽວກັບເງື່ອນໄຂທີ່ຈະຕ້ອງປະເມີນເປັນຕົ້ນແມ່ນຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ແລະ ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ, ຜູ້ປະເມີນຈະຕ້ອງໄດ້ສໍາເນົາເອກະສານຕ່າງໆທີ່ກ່ຽວຂ້ອງກັບການປະເມີນ ເພື່ອເປັນເອກະສານຄັດຕິດ ແລະ ຫຼັກຖານ. (ຕາຕະລາງ 14.2 ເປັນລາຍການເອກະສານທີ່ຕ້ອງການ ແລະ ຕາຕະລາງທີ 14.3 ແມ່ນຕ້ອງໄດ້ຖ່າຍຮູບເພື່ອເປັນຫຼັກຖານອ້າງອີງ). ເອກະສານ ແລະ ຮູບພາບທີ່ກ່ຽວຂ້ອງທັງໝົດແມ່ນຕ້ອງໄດ້ຄັດຕິດກັບບົດລາຍງານການປະເມີນ.

**ຕາຕະລາງ 14.1. ເງື່ອນໄຂການປະເມີນອີງຕາມຜູ້ໃຫ້ຂໍ້ມູນ**

| ເງື່ອນໄຂ | | ຜູ້ສະໜອງຂໍ້ມູນ |
|---|---|---|
| 1. | ເຈົ້າພາບ | ຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ຫຼື ຄະນະບໍລິຫານງານ |
| 2. | ກິດຈະກໍາ | |
| 3. | ການບໍລິຫານຄຸ້ມຄອງ | |
| 4. | ທີ່ຕັ້ງ | |
| 5. | ຄວາມປອດໄພ ແລະ ການຮັກສາຄວາມປອດໄພ | |
| 6. | ການຕະຫຼາດ ແລະ ການໂຄສະນາ | |
| 7. | ຫຼັກການໃນການພັດທະນາແບບຍືນຍົງ | |
| 1. | ທີ່ພັກເຊົາ | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຫຼື ຫຼັງຄາເຮືອນ |
| 2. | ສຸຂະອານາໄມ ແລະ ຄວາມສະອາດ | |

**ໝາຍເຫດ:**

ບາງເງື່ອນໄຂທີ່ກໍານົດຢູ່ໃນມາດຕະຖານສະບັບນີ້ ຊຶ່ງອາດຈະບໍ່ເໝາະສົມກັບບາງປະເທດ ຫຼື ບໍ່ມີ. ດັ່ງນັ້ນ, ການປະເມີນແມ່ນໃຫ້ໝາຍໃສ່ຫ້ອງ (ບໍ່ມີຂໍ້ມູນ ຫຼື N/A) ພ້ອມນັ້ນ, ຜູ້ປະເມີນຕ້ອງຫາຫຼັກຖານທີ່ກ່ຽວຂ້ອງເພື່ອມາອ້າງອີງກັບຂໍ້ດັ່ງກ່າວ.

### ຕາຕະລາງທີ 14.2. ລາຍການເອກະສານທີ່ຕ້ອງການ

| ລາຍການເອກະສານ | ຂະໜາດເອກະສານ | ໝາຍເຫດ |
|---|---|---|
| - ໃບລົງທະບຽນດຳເນີນເຮືອນພັກແຮມປະຊາຊົນ<br>- ໃບຍ້ອງຍໍ ຫຼື ໃບຢັ້ງຢືນທີ່ກ່ຽວຂ້ອງເຮືອນພັກແຮມປະຊາຊົນ<br>- ໃບຢັ້ງຢືນການເຂົ້າຮ່ວມຝຶກອົບຮົມເຮືອນພັກແຮມປະຊາຊົນ<br>- ໂຄງຮ່າງການຈັດຕັ້ງເຮືອນພັກແຮມປະຊາຊົນ<br>- ຂໍ້ມູນຈຳນວນຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ແລະ ສະຖິຕິແຂກມາພັກເຊົາ<br>- ຄູ່ມື ຫຼື ເອກະສານແນະນຳໃນການດຳເນີນເຮືອນພັກແຮມປະຊາຊົນ<br>- ລາຍການຊັບພະຍາກອນການທ່ອງທ່ຽວທີ່ມີຢູ່ໃນບ້ານ<br>- ຄູ່ມືແນະນຳກ່ຽວກັບຄວາມປອດໄພ<br>- ໃບຢັ້ງຢືນເຂົ້າຮ່ວມຝຶກອົບຮົມການປະຖົມພະຍາບານ ຫຼື ກູ້ໄພ<br>- ໃບປິວ ຫຼື ຂໍ້ມູນກ່ຽວກັບຄວາມປອດໄພທີ່ຈະສະໜອງໃຫ້ນັກທ່ອງທ່ຽວ | A4 | - ຜູ້ປະເມີນຕ້ອງສຳເນົາເອົາເອກະສານທີ່ກ່ຽວທັງໝົດ (1 ຊຸດ)<br>- ຂະໜາດເອກະສານເຈ້ຍ A4<br>- ເອກະສານສະບັບຂອງແທ້ກໍຕ້ອງເອົາອອກມາໃຫ້ຜູ້ປະເມີນເບິ່ງ |

### ຕາຕະລາງ 14.3. ລາຍການຮູບພາບ

| ລາຍການເອກະສານ | ຂະໜາດເອກະສານ | ໝາຍເຫດ |
|---|---|---|
| **A. ສະຖານທີ່ພັກ**<br>1. ສະພາບຂອງເຮືອນ<br>2. ຫ້ອງນອນ ແລະ ສິ່ງອຳນວຍຄວາມສະດວກ<br>3. ຫ້ອງນ້ຳ ແລະ ສິ່ງອຳນວຍຄວາມສະດວກ<br>**B. ກິດຈະກຳ**<br>1. ລາຍການກິດຈະກຳ<br>2. ລາຍຊື່ສະຖານທີ່ທ່ອງທ່ຽວ<br>**C. ທີ່ຕັ້ງ**<br>1. ສະພາບເສັ້ນທາງເຂົ້າເຖິງບ້ານ<br>2. ສະພາບປ້າຍຊີ້ບອກທາງ<br>**D. ສຸຂະອານາໄມ ແລະ ຄວາມສະອາດ**<br>1. ສະພາບຂອງເຮືອນ, ເຮືອນຄົວ, ຫ້ອງນ້ຳ, ບໍລິເວນອ້ອມເຮືອນ | ລວງຕັ້ງ<br>PHOTO 6 CM<br>4 CM<br>ລວງນອນ<br>PHOTO<br>6 CM | • ຂະໜາດຮູບນ້ອຍສຸດ 6cm x 4cm<br>• ຕ້ອງເປັນຮູບສີ<br>• ຕ້ອງຄັດຕິດຮູບພາບໃສ່ກັບແບບຟອມປະເມີນຢ່າງຕ່ຳ 2 ຮູບພາບຕໍ່ເງື່ອນໄຂ |

| | | |
|---|---|---|
| 2. ການກະກຽມອາຫານ ແລະ ເຄື່ອງໃຊ້ໃນເຮືອນຄົວ | | |
| **E. ຄວາມປອດໄພ ແລະ ຄວາມສະຫງົບ** | | |
| 1. ມີຂໍ້ມູນກ່ຽວກັບຄວາມປອດໄພ (ອະປະກອນຮັກສາຄວາມປອດໄພ) | | |
| 2. ປ້າຍເຕືອນຕາມເສັ້ນທາງ | | |
| 3. ການໃຫ້ຂໍ້ມູນຄວາມປອດໄພໃນການເຮັດກິດຈະກຳ | | |
| **F. ການໂຄສະນາ** | | |
| 1. ມີເຄື່ອງມືໃນການໂຄສະນາ ເຊັ່ນ: ແຜ່ນພັບ... ຄວາມຍືນຍົງ | | |
| **G. ຄວາມຍືນຍົງ** | | |
| 1. ສິ່ງອຳນວຍຄວາມສະດວກທີ່ເປັນມິດກັບສິ່ງແວດລ້ອມ | | |
| 2. ເຄື່ອງຫັດຖະກຳທີ່ເຮັດໂດຍຊຸມຊົນ, ເຮັດດ້ວຍມື | | |

### 14.1 ຂໍ້ກຳນົດເບື້ອງຕົ້ນຂອງການປະເມີນ

| ລ/ດ | ເຮືອນພັກແຮມປະຊາຊົນ | ເງື່ອນໄຂພື້ນຖານ | ຄຳແນະນຳ |
|---|---|---|---|
| 1. | ຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ຫຼື ຄະນະບໍລິຫານງານ | ຕ້ອງມີຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຢູ່ໃນບ້ານຢ່າງຕ່ຳ 5 ຫຼັງ (DR) | ກວດປຶ້ມໃບລົງທະບຽນການອະນຸຍາດດຳເນີນເຮືອນພັກແຮມປະຊາຊົນ |
| | | ການດຳເນີນການໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງໄດ້ຈັດຕັ້ງມາແລ້ວຢ່າງຕ່ຳ 2 ປີ ຂຶ້ນໄປ | ພາກສ່ວນທີ່ກ່ຽວຂ້ອງຕ້ອງກວດຄືນຄວາມຖືກຕ້ອງຂອງເອກະສານ |
| | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ ຫຼື ຫຼັງຄາເຮືອນ | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງບໍ່ຄະດີໃດໆ (DR) | ກວດປຶ້ມໃບແຈ້ງໂທດຄັດຕິດແບບຟອມສະໝັກ |
| | | | ກວດຄືນຄວາມຖືກຕ້ອງຂອງເອກະສານ |
| | | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນຕ້ອງມີສຸຂະພາບທີ່ແຂງແຮງ (DR) | ກວດປຶ້ມໃບກວດສຸຂະພາບຄັດຕິດກັບແບບຟອມສະໝັກ |
| | | | ກວດຄືນຄວາມຖືກຕ້ອງຂອງເອກະສານ. |

ໃນກໍລະນີທີ່ຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນບໍ່ສາມາດບັນລຸເງື່ອນໄຂທີ່ກຳນົດໃນຂ້າງເທິງນັ້ນ, ເຮືອນພັກແຮມປະຊາຊົນກໍບໍ່ມາດທີ່ຈະສະໝັກນັບລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນໄດ້. ແຕ່ຖ້າຫາກຄະນະ

ຮັບຜິດຊອບເຮືອນພັກແຮມປະຊາຊົນສາມາດບັນລຸຕາມເງື່ອນໄຂທີ່ກໍານົດຂ້າງເທິງ, ທາງຄະນະກໍາມະການປະເມີນມາດຕະຖານກໍຈະສືບຕໍ່ຂັ້ນຕອນໃນການປະເມີນເຮືອນພັກແຮມປະຊາຊົນນັ້ນ.

ແບບຟອມສະໝັກ, ໃບກວດສຸຂະພາບ, ໃບແຈ້ງໂທດ ສາມາດປະກອບເປັນເອກະສານຊ້ອນທ້າຍ. ສໍາລັບໃບແຈ້ງໂທດ ແລະ ໃບກວດສຸຂະພາບແມ່ນສາມາດນໍາໃຊ້ແບບຟອມທີ່ຄັດຕິດມາພ້ອມກັບມາດຕະຖານສະບັບນີ້ໄດ້ ຫຼື ອາດຈະນໍາໃຊ້ແບບຟອມທີ່ທາງພາກສ່ວນກ່ຽວຂ້ອງຂອງແຕ່ລະປະເທດໄດ້ກໍານົດມາແລ້ວກໍສາມາດໃຊ້ໄດ້ເຊັ່ນກັນ.

### 14.2. ເງື່ອນໄຂການປະເມີນສໍາລັບຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ.

#### 1. ເງື່ອນໄຂຫຼັກທີ 1-ເຈົ້າພາບ (ຄ່າມາດຖານ: 5%)

| ເງື່ອນໄຂຍ່ອຍ | | ເງື່ອນໄຂທີ່ຕ້ອງການ | ຄໍາແນະນໍາ |
|---|---|---|---|
| 1.1. | ບ້ານ ແລະ ຊຸມຊົນ | 1.1.1. ມີແຫຼ່ງທ່ອງທ່ຽວທໍາມະຊາດ ຫຼື ວັດທະນະທີ່ຕັ້ງຢູ່ໃກ້ກັບບ້ານ ແລະ ຊຸມຊົນ. (DR, IV)<br>>> ສະຖານທີ່ໃຫ້ທີ່ສຸດ: km | ສໍາພາດກັບຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນ ເພື່ອໃຫ້ຮູ້ວ່າມີແຫຼ່ງທ່ອງທ່ຽວທໍາມະຊາດ, ວັດທະນະທໍາຢູ່ໃນຊຸມຊົນ, ໄລຍະທາງ, ການເຂົ້າເຖິງ |
| | | | ລະບຸສະຖານທີ່ທ່ອງທ່ຽວອື່ນທີ່ໃກ້ຄຽງ |
| | | | ນໍາໃຊ້ແຜນທີ່ໃນການລະບຸໄລຍະທາງ ແລະ ເສັ້ນທາງເຂົ້າເຖິງ |
| | | | ຂຽນຈໍານວນໄລະຍະທາງໃສ່ບ່ອນທີ່ກໍານົດໃຫ້ (km) |
| | | 1.1.2. ໄດ້ຮັບໃບຢັ້ງຢືນ ຫຼື ລາງວັນຈາກການແຂ່ງຂັນໃດໜຶ່ງ. (DR)<br>>> ຊື່ລາງວັນ: | ສອບຖາມຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນກ່ຽວກັບໃບຍ້ອງຍໍ ແລະ ລາງວັນທີ່ໄດ້ຮັບໃນໄລຍະທີ່ຜ່ານ |
| | | | ລະບຸບັນດາລາງວັນທີ່ໄດ້ຮັບໄລຍະທີ່ຜ່ານມາໃສ່ບ່ອນວ່າງທີ່ກໍານົດໄວ້ |
| | | | ສໍາເນົາເອົາໃບຍ້ອງຍໍ ແລະ ຖ່າຍຮູບເອົາໂລ້ລາງວັນເພື່ເປັນຫຼັກຖານອ້າງອີງ |
| | | | ລະບຸປະເພດລາງວັນທີ່ໄດ້ຮັບ. |
| | | | ຄັດຕິດຮູບພາບ ຫຼື ສໍາເນົາເອກະສານໃສ່ກັບບົດລາຍງານ |
| | | 1.1.3. ພາຍໃນບ້ານມີສະໂມສອນລວມບ້ານ ຫຼື ບໍ?. (SI) | ລົງຢ້ຽມຢາມສະໂມສອນບ້ານ |
| | | | ຖ່າຍຮູບເອົາສະໂມສອນບ້ານ |
| | | | ຄັດຕິດຮູບພາບສະໂມສອນບ້ານໃສ່ບົດລາຍງານ |

| | | | |
|---|---|---|---|
| 1.2. | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນ | ຜູ້ໃຫ້ບໍລິການເຮືອນພັກແຮມປະຊາຊົນໄດ້ເຂົ້າຮ່ວມຝຶກອົບຮົມໃນການໃຫ້ບໍລິການເຮືອນພັກແຮມປະຊາຊົນ. (DR) | ສອບຖາມເບິ່ງໃບຢັ້ງຢືນການເຂົ້າຮ່ວມຝຶກອົບຮົມ. |
| | | | ພາກສ່ວນໃດເປັນຜູ້ຈັດຝຶກອົບຮົມ. |
| | | | ຖ່າຍຮູບເອົາໃບຢັ້ງຢືນ |
| | | | ຄັດຕິດຮູບໃບຢັ້ງຢືນໃສ່ກັບບົດລາຍງານ |

## 2. ເງື່ອນໄຂຫຼັກທີ 2 – ກິດຈະກຳ (ຄ່າມາດຖານ: 20%)

| ເງື່ອນໄຂຍ່ອຍ | | ເງື່ອນໄຂທີ່ຕ້ອງການ | ຄຳແນະນຳ |
|---|---|---|---|
| 2.1. | ກິດຈະກຳຂອງບ້ານ ແລະ ຊຸມຊົນ | 2.1.1 ສະແດງໃຫ້ເຫັນເຖິງຊັບພະຍາກອນຂອງທ້ອງຖິ່ນເຊັ່ນ: ຮີດຄອງປະເພນີ,ສິລະປະວັດທະນະທຳ,ມໍລະດົກຂອງທ້ອງຖິ່ນ, ຮ້ານຂາຍເຄື່ອງທີ່ລະນຶກ ແລະ ຊັບພະຍາກອນທຳມະຊາດອື່ນໆ | ສອບຖາມຄະນະຮັບຜິດຊອບເຮືອນພັກແຮມປະຊາຊົນກ່ຽວກັບຊັບພະຍາກອນຂອງທ້ອງຖິ່ນ ເຊັ່ນ: ຮີດຄອງປະເພນີ, ສິລະປະວັດທະນະທຳ, ມໍລະດົກຂອງທ້ອງຖິ່ນ, ຮ້ານຂາຍເຄື່ອງທີ່ລະນຶກ ແລະ ຊັບພະຍາກອນທຳມະຊາດອື່ນໆ |
| | | | ສອບຖາມຂໍ້ມູນກ່ຽວກັບຄວາມເປັນ (ປະຫວັດ) ກ່ຽວກັບຊັບພະຍາກອນຂອງທ້ອງຖິ່ນ ເຊັ່ນ: ຮີດຄອງປະເພນີ, ສິລະປະວັດທະນະທຳ, ມໍລະດົກຂອງທ້ອງຖິ່ນ |
| | | | ສອບຖາມເບິ່ງລາຍການກິດຈະກຳການທ່ອງທ່ຽວ, ແຜ່ນພັບ... |
